## The Arc-C

**Association for Retarded Citizens-California**
**1228 - 8th Street, Suite 590**
**Sacramento CA 95814-2213**
**(916) 552-6619**



**Disability Rights California**
**100 Howe Avenue, Suite 185-N**
**Sacramento CA 95825**
**(916) 488-9950 ຫລື**
**ເລກໂທຟຣີ 1-800-776-5746**



5005.12
June 2001
Laotian


# ເລື້ອງການຈັດຕັ້ງຜູ້ປົກຄອງດູແລໂດຍສານ, ບັນຊີເງິນພິເສດແລະ ພິໄນກຳສຳລັບຄົນທີ່ມີອາການພິການ ດ້ານການເຕີບໂຕແລະດ້ານ ອື່ນໆ – ຄູ່ມືຄຳແນະນຳສຳລັບຄອບຄົວ

**(CONSERVATORSHIP, TRUSTS AND WILLS FOR PEOPLE WITH DEVELOPMENTAL OR OTHER DISABILITIES — A GUIDE FOR FAMILIES)**

STERLING L. ROSS, JR., ທະນາຍຄວາມ

ມອບໝາຍໂດຍ
**ASSOCIATION FOR RETARDED CITIZENS-CALIFORNIA**

ພິມຄັ້ງທ 6
ດັດແປງເປັນສ່ວນໆແລະພິມໂດຍ **Disability Rights California**



**Association for Retarded Citizens-California (ARC-C)** ແມ່ນບໍຣິສັດທີ່ບໍ່ຫາຜົນກຳໄລແລະທີ່ສ້າງປະໂຫຍດສາທາຣະນະ, ຊຶ່ງໄດ້ຈັດຕັ້ງຂຶ້ນໂດຍພວກພໍ່ແມ່ແລະໝູ່ເພື່ອນທີ່ມີຄວາມຫ່ວງຕໍ່ຄົນປັນຍາອ່ອນ ເປັນເວລາ 30 ປີກວ່າແລ້ວ. ອົງການ ARC-C ເປັນຕົວແທນໃຫ້ສະມາຊິກຫລ1າຍກວ່າ 30,000 ຄົນຂອງໜ່ວຍສະມາຊິກປະຈຳທ້ອງຖິ່ນຫລາຍກ່ວາ 65 ແຫ່ງໃນຣັດແຄລິຟໍເນັຍ. ຕລອດຫລາຍປີຜ່ານມານີ້, ໜ້າທີ່ສຳຄັນຂອງ ARC-C ຄືໃຫ້ຕົວແທນສເນີນະໂຍບາຍສາທາຣະນະອັນກ້າວໜ້າຕໍ່ພວກສະມາຊິກຂອງ ARC-C ເອງ, ຕໍ່ສະພາຜູ້ແທນຣາຊດອນ, ເຈົ້າໜ້າທີ່ຣັຖບານ, ແລະອົງການອາສາສມັກບໍຣິການສຸຂະພາບແລະປະຊາສົງເຄາະອື່ນໆ. ນອກຈາກການຊ່ວຍສູ້ເພື່ອສິດຕໍ່ສະພາຜູ້ແທນຣາຊດອນ, ທາງ ARC-C ຍັງໃຫ້ການຊ່ວຍແລະບໍຣິການດ້ານເທັກນິກໃຫ້ກັບໜ່ວຍປະຈຳທ້ອງຖິ່ນຕ່າງໆ, ແລະເປັນແຫລ່ງສິ່ງເສີມການແລກປ່ຽນຂໍ້ມູນ, ໂດຍການຈັດສິ່ງຕີພິມຕ່າງໆ, ການຈັດສຳມະນາ, ການປະຊຸມ, ການປະຊຸມພາກປະຕິບັດ, ແລະກອງປະຊຸມໃຫຍ່ປະຈຳປີລະດັບຣັດ. ເພື່ອລາຍລະອຽດເພີ້ມຕື່ມໃຫ້ຕິດຕໍ່:

**Association for Retarded Citizens-California (ARC-C)**
1228 - 8th Street, Suite 590
Sacramento, CA 95814
(916) 552-6619



**ບັນຊີເງິນພິເສດປະເພດດັດແປງໄດ້.** ບັນຊີເງິນພິເສດທີ່ມີຂໍ້ກຳນົດແລະເງື່ອນໄຂທີ່ດັດແປງຫລືຍົກເລີກໄດ້.

**ການເປັນເຈົ້າຂອງລວມ.** ການຖືກຳມະສິດໃນຊັບສິນທີ່ດິນຫລືຊັບສິນສ່ວນຕົວໂດຍສອງຄົນຂຶ້ນໄປປະເພດໜຶ່ງ. ການເປັນເຈົ້າຂອງລວມບໍ່ມີສິດສືບຕໍ່ຊັບສິນກັນ, ຄວາມສຳພັນກັນທາງກົດໝາຍແລະຜົນໃນການສືບທອດຈຶ່ງແຕກຕ່າງກັນຫລາຍກັບການເປັນເຈົ້າຂອງຮ່ວມ.

**ຜູ້ເຮັດພິໄນກຳ.** ບຸກຄົນຜູ້ເຊັນພິໄນກຳ, ແລະໄດ້ກຳນົດການຈຳໜ່າຍຊັບສິນໂດຍທາງພິໄນກຳນັ້ນ. ຄຳສັບ "Testatrix" ແມ່ນຄຳສັບທີ່ໝາຍເຖິງເພດຍິງ, ແຕ່ວ່າຕາມທັມມະດາ, ເພື່ອອຳນວຍຄວາມສະດວກ, ຈະໃຊ້ຄຳສັບ "testator" ໃຫ້ໝາຍເຖິງທັງເພດຊາຍແລະຍິງກໍໄດ້.

**ບັນຊີເງິນພິເສດ.** ສິ່ງທີ່ທາງກົດໝາຍຍອມຮັບເໝືອນເປັນບຸກຄົນທີ່ຈັດຕັ້ງຕາມຂໍ້ຕົກລົງທີ່ເປັນລາຍລັກອັກສອນທີ່ເຊັນຊື່ໄວ້ເວລາຍັງມີຊີວິດຢູ່ຫລືຕາມພິໄນກຳ. ບັນຊີເງິນພິເສດຖືກປົກຄອງຕາມເງື່ອນໄຂຂອງເອກະສານນັ້ນ.

**ຜູ້ດູແລຊັບສິນ.** ບຸກຄົນຫລືບໍຣິສັດທີ່ດູແລຊັບສິນທີ່ຢູ່ໃນບັນຊີເງິນພິເສດ.

**ຜູ້ຈັດບັນຊີເງິນພິເສດ.** ບຸກຄົນທີ່ຈັດບັນຊີເງິນພິເສດຂຶ້ນ. ບັນຊີເງິນພິເສດສາມາດມີຜູ້ຈັດຫລາຍກວ່າຄົນໜຶ່ງກໍໄດ້.

**ຊັບສິນທີ່ຢູ່ໃນບັນຊີເງິນພິເສດ.** ຊັບສິນທີ່ໄວ້ຢູ່ໃນບັນຊີເງິນພິເສດ, ລວມທັງຕົ້ນທຶນແລະລາຍໄດ້.

**ພິໄນກຳ.** ເອກະສານທີ່ບຸກຄົນໜຶ່ງໄດ້ເຊັນຊື່ເພື່ອກຳນົດການຈຳໜ່າຍຊັບສິນຢ່າງເປັນລະບຽບຮຽບຮ້ອຍຫລັງຈາກເຂົາຕາຍ.

**ບັນຊີເງິນພິເສດປະເພດດັດແປງບໍ່ໄດ້.** ບັນຊີເງິນພິເສດທີ່ມີເງື່ອນໄຂທີ່ດັດແປງ ຫລືຍົກເລີກບໍ່ໄດ້. ມີສະຖານະການຈຳກັດບາງຢ່າງທີ່ສານສາມາດດັດ ແປງໄດ້ຢ່າງຈຳກັດ[2].

**ລູກຕາມເຊື້ອສາຍ.** ຕາມທັມມະດາ, ລູກຫລືຄົນສືບຕໍ່ຕາມເຊື້ອສາຍ, ແຕ່ ວ່າ, ໂດຍທາງພິໄນກຳ, ເຈົ້າຂອງພິໄນກຳສາມາດຕີຄວາມໝາຍວ່າລູກ ຕາມເຊື້ອສາຍລວມທັງລູກລ້ຽງຕາມກົດໝາຍກໍໄດ້.

**ເຈົ້າຂອງຮ່ວມ.** ການເປັນເຈົ້າຂອງຊັບສິນປະເພດໜຶ່ງທີ່ມີສອງຄົນຂຶ້ນໄປທີ່ກຳນົດ ວ່າເປັນ "ເຈົ້າຂອງຮ່ວມທີ່ມີສິດສືບຕໍ່ຊັບສິນ." ເມື່ອເຈົ້າຂອງຮ່ວມຜູ້ໜຶ່ງ ຕາຍ, ຜົນປະໂຫຍດໃນຊັບສິນຂອງເຂົາກໍຕົກໄປໃຫ້ເຈົ້າຂອງຮ່ວມທີ່ເຫລືອ ຢ່າງອັດຕະໂນມັດໂດຍບໍ່ຂຶ້ນກັບພິໄນກຳຂອງຜູ້ຕາຍເລີຍ; ຊັບສິນນັ້ນຖືກສືບ ທອດໄປແບບນອກຂອບເຂດການພິສູດພິໄນກຳຂອງສານ.

**ກອງຊັບສິນຕລອດຊົ່ວຊີວິດ.** ຜົນປະໂຫຍດໃນຊັບສິນ, ຊຶ່ງຈະມີອາຍຸເທົ່າກັນກັບ ຊີວິດຂອງຄົນທີ່ຮັບຜົນປະໂຫຍດ.

**ເດັກທີ່ບໍ່ທັນເຖິງກະສຽນ.** ພາຍໃນຣັດແຄລິຟໍເນັຍ, ເປັນບຸກຄົນທີ່ມີອາຍຸຕ່ຳ ກວ່າ 18 ປີ.

**ຊັບສິນສ່ວນຕົວ.** ຊັບສິນທີ່ເຄື່ອນຍ້າຍໄດ້, ທີ່ກົງກັນຂ້າມກັບຊັບສິນທີ່ດິນ, ຊຶ່ງເຄື່ອນຍ້າຍບໍ່ໄດ້. ຊັບສິນສ່ວນຕົວລວມທັງເຄື່ອງເຮືອນ, ຣົດ, ແລະ ເຄື່ອງໃຊ້.

**ການພິສູດພິໄນກຳ.** ການດຳເນີນຂອງສານເມື່ອສານພິສູດພິໄນກຳ. ສານຈະມີ ອຳນາດເໜືອຊັບສິນທີ່ສືບທອດຈາກຜູ້ຕາຍໄປຫາຜູ້ຮັບຜົນປະໂຫຍດພາຍໃຕ້ ພິໄນກຳຫລືທາຍາດເມື່ອບໍ່ມີພິໄນກຳ.

**ຊັບສິນທີ່ດິນ.** ຜົນປະໂຫຍດໃນທີ່ດິນຫລືຊັບສິນທີ່ມີຢູ່ກັບທີ່ດິນຢ່າງຖາວອນ.

**ຜົນປະໂຫຍດທີ່ເຫລືອ.** ຊັບສິນທີ່ເຫລືອໃນບັນຊີເງິນພິເສດຫລັງຈາກອາຍຸເຈົ້າ ຂອງຫລືເຈົ້າຂອງປະເພດຕລອດຊົ່ວຊີວິດໄດ້ຮັບຜົນປະໂຫຍດຂອງຊັບສິນທັງໝົດ ທີ່ເຂົາມີສິດໄດ້ຮັບ.

**ຜູ້ຮັບຊັບສິນທີ່ເຫລືອ.** ບຸກຄົນທີ່ມີສິດໄດ້ຮັບຜົນປະໂຫຍດຊັບສິນທີ່ເຫລືອ.



**Disability Rights California** ເປັນອົງການ ເອກະຊົນທີ່ບໍ່ຫາຜົນກຳໄລທີ່ປ້ອງກັນສິດທິດ້ານກົດໝາຍ, ດ້ານແພ່ງ, ແລະດ້ານການຮັບບໍຣິການຂອງຊາວແຄລິຟໍເນັຍຜູ້ມີອາການພິການ. ກົດ ໝາຍຣັຖບານກາງກຳນົດໃຫ້ແຕ່ລະຣັດຕ້ອງມີລະບົບໄວ້ເພື່ອປ້ອງກັນສິດທິ ຂອງຄົນທີ່ມີອາການພິການ. PAI ໄດ້ຮັບມອບໝາຍໃຫ້ເປັນລະບົບນັ້ນ ພາຍໃນຣັດແຄລິຟໍເນັຍ. PAI ມີບໍຣິການຊ່ວຍສູ້ເພື່ອສິດຫລາຍຢ່າງສຳລັບ ຄົນທີ່ມີອາການພິການ – ຮ່ວມທັງບໍຣິການຂໍ້ມູນແລະການສົ່ງຕໍ່, ການ ຊ່ວຍເຫລືອທາງເທັກນິກ, ແລະການຕົວແທນໂດຍກົງ. ເພື່ອລາຍລະອຽດ ຫລືການຊ່ວຍຫລືອ, ໃຫ້ໂທຫາ:



**ເລກໂທຟຣີ**

**1-800-776-5746**

Central Office (ສຳນັກງານກາງ)
100 Howe Avenue
Suite 185-N
Sacramento, CA 95825
(916) 488-9950

So. California Area Office
(ສຳນັກງານຣັດແຄລິຟໍເນັຍເຂດໃຕ້)
3580 Wilshire Blvd.
Suite 902
Los Angeles, CA 9001
(213) 427-8747

Bay Area Office
(ສຳນັກງານເຂດເບຍ໌)
449 - 15th Street
Suite 401
Oakland, CA 94612
(510) 839-0811

# ຄຳນຳ

ປື້ມຄູ່ມື Association for Retarded Citizens-California(ARC-C), ຊຶ່ງກ່ອນວັນທີ 5 ກຸມພາ 1981ເຄີຍໄດ້ມີຊື່ວ່າ ສະມາຄົມສຳລັບຄົນທີ່ມີປັນຍາອ່ອນແຫ່ງຣັດແຄລິຟໍເນັຍ (C.A.R.).

ທ່ານ Sterling L. Ross, Jr., ທະນາຍຄວາມ, ໄດ້ດຳເນີນການຄົ້ນຄວ້າແລະວິຈັຍເພື່ອຂຽນຄູ່ມືນີ້ສະບັບທຳອິດຕາມສັນຍາກັບ ARC-C. ທ່ານ Ross ເຄີຍໄດ້ຊ່ວຍຫລາຍຄອບຄົວທີ່ໄດ້ມີສະມາຊິກທີ່ມີອາການພິການໃນລະຫວ່າງການປະຕິບັດໜ້າທີ່ເປັນທະນາຍຄວາມເອກະຊົນເກືອບ 20 ປີ, ຊຶ່ງສ່ວນໃຫຍ່ໄດ້ປະຕິບັດໜ້າທີ່ໃນເຄົາທ໌ຕີ້ແຊນແຟຣນຊິສໂກແລະມາຣິນ. ທ່ານຣອສ໌ເຄີຍເປັນທະນາຍຄວາມປະຈຳການຜູ້ທຳອິດຂອງ C.A.R. ແລະໄດ້ຮັບໃຊ້ຈາກປີ 1971 ຕລອດປີ 1973.

ປື້ມຄູ່ມືນີ້ໄດ້ຈັດຂຶ້ນເພື່ອອະທິບາຍເລື່ອງກົດໝາຍທີ່ຫຍຸ້ງຍາກກ່ຽວກັບການຕັ້ງຜູ້ປົກຄອງດູແລໂດຍສານແລະການຕັ້ງຜູ້ປົກຄອງດູແລໂດຍສານທີ່ມີຂໍ້ຈຳກັດ, ແລະການຕັ້ງບັນຊີເງິນເພື່ອຄວາມຕ້ອງການພິເສດ. ການຂຽນຄູ່ມືດັ່ງກ່າວນີ້ມີເປົ້າໝາຍເພື່ອໃຊ້ຄຳສັບທີ່ "ຊາວແຄລິຟໍເນັຍຜູ້ອ່ານໄດ້ທົ່ວໄປ" ສາມາດເຂົ້າໃຈໄດ້. ໂດຍເຫັນແກ່ກຸ່ມເປົ້າໝາຍຂອງປື້ມຄູ່ມືນີ້, ພວກຜູ້ຂຽນຈຶ່ງໄດ້ໃຊ້ຄຳສັບສະເພາະສຳລັບປະຊາກອນທີ່ມີອາການ "ປັນຍາອ່ອນ" ແລະ "ຜູ້ພິການດ້ານການເຕີບໂຕ" ແລະ "ພໍ່ແມ່" ຂອງເຂົາ; ຢ່າງໃດກໍດີ, ກົດໝາຍທີ່ເອົາມາອ້າງມັກມີຂອບເຂດທີ່ກວ້າງກວ່າກຸ່ມສະເພາະນີ້. ຄູ່ມືສະບັບນີ້ໄດ້ຮວມການປ່ຽນແປງທາງກົດໝາຍທີ່ມີຜົນບັງຄັບຕັ້ງແຕ່ ວັນທີ 1 ມົກກະຣາ 1996 ນຳ.

# ບັນຊີຄຳສັບທາງກົດໝາຍ

**ຜູ້ຮັບຜົນປະໂຫຍດ.** ບຸກຄົນຫລືບໍຣິສັດທີ່ຮັບຜົນປະໂຫຍດຂອງການທຸຣະກິດ, ເຊັ່ນຜູ້ຮັບຜົນປະໂຫຍດຈາກການປະກັນຊີວິດ, ຜູ້ຮັບຜົນປະໂຫຍດຈາກບັນຊີເງິນພິເສດ, ຜູ້ຮັບຜົນປະໂຫຍດພາຍໃຕ້ຂໍ້ກຳນົດຂອງພິໄນກຳ.

**ຂໍ້ກຳນົດເພີ້ມຕື່ມພິໄນກຳ.** ຂໍ້ກຳນົດເພີ້ມຕື່ມພິໄນກຳເປັນເອກະສານຕ່າງຫາກ, ທີ່ມີການເຊັນຊື່ໂດຍໃຊ້ວິທີທາງການຄືກັນກັບພິໄນກຳ. ຈະປ່ຽນແປງຫລືຍົກເລີກຂໍ້ກຳນົດເພີ້ມຕື່ມພິໄນກຳເມື່ອໃດກໍໄດ້.

**ຜູ້ຮັບການປົກຄອງດູແລ.** ບຸກຄົນທີ່ຢູ່ພາຍໃຕ້ການປົກຄອງດູແລຊຶ່ງມີຄົນປົກຄອງດູແລຖືກແຕ່ງຕັ້ງໃຫ້.

**ຄຳສັນຍາ.** ຄຳຕົກລົງທີ່ບັງຄັບໃຊ້ທາງກົດໝາຍໄດ້.

**ບັນຊີເງິນພິເສດປະເພດໃຊ້ດຸນພິນິດ.** ບັນຊີເງິນພິເສດທີ່ຈັດໃຫ້ເປັນກອງທຶນເພື່ອລ້ຽງຜູ້ຮັບຜົນປະໂຫຍດ, ຊຶ່ງມີເງື່ອນໄຂປ້ອງກັນຜົນປະໂຫຍດຂອງຜູ້ຮັບຈາກການຟ້ອງຂອງເຈົ້າໜີ້.

**ພາສີກອງຊັບສິນ (ຣັຖບານກາງ) ພາສີທີ່ຣັຖບານກາງເກັບເມື່ອໂອນຊັບສິນຂອງຜູ້ຕາຍ.** ຕາມທັມມະດາ, ຜູ້ຈັດການມໍຣະດົກເປັນຜູ້ເສັຍພາສີນັ້ນ.

**ຜູ້ສືບທອດ.** ຜູ້ທີ່ຮັບມໍຣະດົກພາຍໃຕ້ກົດໝາຍຂອງຣັດ.

**ພາສີການສືບທອດ.** ພາສີທີ່ເກັບຈະຂຶ້ນກັບຄວາມສຳພັນກັນລະຫວ່າງຜູ້ຕາຍແລະຜູ້ທີ່ໄດ້ຮັບຊັບສິນ. ພາສີການສືບທອດຂອງຣັດແຄລິຟໍເນັຍໄດ້ຖືກຍົກເລີກໂດຍກົດໝາຍປະຊາຊົນໃນເດືອນມິຖຸນາ 1982.

**ບັນຊີເງິນພິເສດລະຫວ່າງຄົນທີ່ຍັງມີຊີວິດ** (Inter vivos trust). ບັນຊີເງິນພິເສດທີ່ຈັດຂຶ້ນ "ໃນລະຫວ່າງຄົນທີ່ຍັງມີຊີວິດ," ທີ່ເອີ້ນອີກວ່າ "ບັນຊີເງິນພິເສດປະເພດຈັດຕັ້ງກ່ອນຕາຍ." ເຈົ້າຂອງເງິນທີ່ມອບໝາຍໃຫ້ເປີດບັນຊີເງິນພເສດເປັນຄົນທີ່ຍັງມີຊີວິດຢູ່. ໃຫ້ທຽບບັນຊີນີ້ກັບບັນຊີເງິນພິເສດທີ່ຈັດຂຶ້ນຕາມພິໄນກຳຂອງຄົນທີ່ຕາຍແລ້ວ.

ການຮ່ວມມືກັບທະນາຍຄວາມຂອງທ່ານທຸກເທື່ອຈະເປັນສິ່ງສຳຄັນເພື່ອຊ່ວຍທ່ານໃຫ້ສຳເຣັດໜ້າທີ່. ເມື່ອມີຄວາມສົງສັຍ, ໃຫ້ຕິດຕໍ່ທະນາຍຄວາມຂອງທ່ານ.

SUPERVISING PROBATE JUDGE
Courtesy ... LONG BEACH REPORTER
P.O. Box 4278
3010 E. Anaheim St.
Long Beach, CA 90804
(213) 432-5207 ຫລື (213) 438-5641



ມີບັນຊີຄຳສັບທາງກົດໝາຍທີ່ມັກໃຊ້ໃນເລື່ອງນີ້ທີ່ຂຶ້ນຕົ້ນໃນໜ້າສຸດທ້າຍ. ເພື່ອຊ່ວຍໃຫ້ທ່ານອ້າງອີງໄດ້, ກະຣຸນາທົບທວນຄຳສັບເຫລົ່ານີ້ກ່ອນ.

ພວກເຮົາເຈຕນາບໍ່ໃຊ້ຂໍ້ອ້າງອີງທາງກົດໝາຍແລະຄຳອະທິບາຍທີ່ລະອຽດ. ຜູ້ອ່ານຕ້ອງເຂົ້າໃຈໄວ້ວ່າປຶ້ມຄູ່ມືນີ້ມີໄວ້ເພື່ອຊ່ວຍໃຫ້ທ່ານຄິດໃສ່ເລື່ອງແລະຄຳຖາມທີ່ຈຳເປັນຕ້ອງພິຈາຣະນາເມື່ອມີຄວາມສົນໃຈກ່ຽວກັບການຈັດຕັ້ງການປົກຄອງດູແລໂດຍຄຳສັ່ງຈາກສານ, ການປົກຄອງດູແລໂດຍມີຂໍ້ຈຳກັດ, ພີໄນກຳ, ຫລືຕັ້ງບັນຊີເງິນພິເສດ.

ຖ້າຫາກວ່າມີຄຳຖາມໃດໆກ່ຽວກັບການໃຊ້ຄຳອະທິບາຍໃນປຶ້ມຄູ່ມືນີ້ເພື່ອແກ້ໄຂບັນຫາສ່ວນຕົວ, ຜູ້ອ່ານຄວນຊອກຫາຄຳແນະນຳຈາກທະນາຍຄວາມ.

## ບົດທີ 1

# ການຕັ້ງຜູ້ປົກຄອງດູແລ, ການປົກຄອງຄົນ, ແລະການປົກຄອງດູແລປະເພດຈຳກັດ

## ຄວາມໝາຍຂອງຄຳສັບ

## ການປົກຄອງດູແລແມ່ນຫຍັງ?

ການຕັ້ງຜູ້ປົກຄອງດູແລແມ່ນການດຳເນີນຂອງສານຊຶ່ງມີຄົນໃດຄົນໜຶ່ງຫລືອົງການໃດໜຶ່ງ (ທີ່ຈະເອີ້ນວ່າ "ຜູ້ປົກຄອງດູແລ") ທີ່ທາງສານໄດ້ແຕ່ງຕັ້ງໃຫ້ຮັບຜິດຊອບຕໍ່ຄົນທີ່ຕ້ອງການການຊ່ວຍເຫລືອໃນການດຳເນີນຊີວິດປະຈຳວັນ ("ຜູ້ຮັບການປົກຄອງດູແລ"). **ຜູ້ປົກຄອງດູແລບຸກຄົນ**ຕ້ອງຮັບຜິດຊອບໃຫ້ຜູ້ຮັບການປົກຄອງດູແລໄດ້ມີອາຫານການກິນ, ເຄື່ອງຫົ່ມແລະທີ່ພັກອາສັຍຢ່າງເໝາະສົມ. **ຜູ້ປົກຄອງດູແລຊັບສິນ**ຮັບຜິດຊອບຕໍ່ເງິນແລະຊັບສິນຢ່າງອື່ນຂອງຜູ້ຮັບການປົກຄອງດູແລ. ຄົນໜຶ່ງສາມາດຮັບໜ້າທີ່ເປັນຜູ້ປົກຄອງດູແລບູກຄົນຫລືຊັບສິນຫລືທັງສອງກໍໄດ້. ການປົກຄອງດູແລມີຜົນໃຊ້ໄດ້ກັບຜູ້ໃຫຍ່, ຄືບຸກຄົນທີ່ມີອາຍຸສິບແປດ(18) ປີຂຶ້ນໄປ.

ກ່ອນສານຈະອະນຸຍາດຄຳຮ້ອງຂໍການຕັ້ງຜູ້ປົກຄອງດູແລບຸກຄົນໄດ້, ຕ້ອງມີການພິສູດວ່າຜູ້ຈະຮັບການປົກຄອງດູແລນັ້ນບໍ່ສາມາດເບິ່ງແຍງໂຕເອງໄດ້ຢ່າງເໝາະສົມທາງດ້ານສຸຂະພາບຮ່າງກາຍ, ອາຫານການກິນ, ເຄື່ອງນຸ່ງຫົ່ມຫລືທີ່ພັກອາສັຍ. ອາດມີການແຕ່ງຕັ້ງຜູ້ປົກຄອງດູແລເພື່ອຄົນທີ່ບໍ່ສາມາດເກັບຮັກສາຊັບສິນເງິນທອງຂອງຕົນໄດ້ຫລືບໍ່ສາມາດປະຕິເສດການສໍ້ໂກງຫລືອິດທິພົນທີ່ບໍ່ເໝາະສົມ.



ລູກທີ່ບໍ່ທັນເຖິງກະສຽນຫລັງຈາກການພິຈາຣະນາຄຳຮ້ອງຂໍທີ່ທ່ານໄດ້ຍື່ນ, ແຕ່ທ່ານບໍ່ສາມາດຈ່າຍເງິນນັ້ນຈົນສານໄດ້ອອກຄຳສັ່ງ. ໃນຖານະເປັນຕົວແທນ, ທ່ານບໍ່ຕ້ອງຈ່າຍເງິນກອງຊັບສິນຈົນທ່ານໄດ້ຮັບອະນຸຍາດຈາກສານພິສູດພິໄນກຳ. ຖ້າທ່ານບໍ່ໄດ້ຮັບອະນຸຍາດດັ່ງກ່າວ, ທ່ານຈະຕິດໜີ້ຈຳນວນນັ້ນ, ຄື: ທ່ານຈະຕ້ອງຊົດເຊີຍຄືນໃຫ້ແກ່ກອງຊັບສິນຈາກເງິນຂອງທ່ານເອງ. (ມີຂໍ້ຍົກເວັ້ນ, ເຊັ່ນຄຳຮຽກຮ້ອງຂອງເຈົ້າໜີ້ທີ່ໄດ້ຮັບອະນຸມັດຫລືການເສັຍພາສີ. ຢ່າງໃດກໍດີ, ໃຫ້ປຶກສາທະນາຍຄວາມຂອງທ່ານກ່ອນຈ່າຍຄ່ານີ້.)

3. ທ່ານສາມາດຊົດເຊີຍໂຕເອງໄດ້ສຳລັບຄ່າສານທີ່ທ່ານໄດ້ຈ່າຍໃຫ້ແກ່ສະມຽນເຄົານ໌ຕີ້ແລະສຳລັບຄ່າຄ້ຳປະກັນຂອງທ່ານ. ທ່ານບໍ່ສາມາດຈ່າຍຄ່າໃຫ້ແກ່ທະນາຍຄວາມຂອງທ່ານຫລືໃຫ້ແກ່ທ່ານເອງໂດຍປາດສະຈາກຄຳສັ່ງຂອງສານ.

4. ພາຍໃນ 3 ເດືອນຫລັງຈາກທ່ານຖືກແຕ່ງຕັ້ງ, ທ່ານຕ້ອງຍື່ນບັນຊີເງິນແລະຊັບສິນອື່ນທັງໝົດຂອງກອງຊັບສິນຊຶ່ງຢູ່ກັບທ່ານໃຫ້ແກ່ສານ. ທ່ານຕ້ອງຈັດການໃຫ້ສານແຕ່ງຕັ້ງເຈົ້າໜ້າທີ່ເພື່ອຕີລາຄາຂອງຊັບສິນດັ່ງກ່າວ, ແລ້ວບັນຊີຊັບສິນແລະໃບປະເມີນລາຄາຕ້ອງຍື່ນໃຫ້ກັບສານ. (ຕົວແທນ, ບໍ່ແມ່ນເຈົ້າໜ້າທີ່, ຈະເປັນຜູ້ຕີລາຄາຂອງ "ເຄື່ອງທີ່ເປັນເງິນສົດ" ບາງຢ່າງ ແລະທະນາຍຄວາມຂອງທ່ານຈະອະທິບາຍວິທີນີ້ໃຫ້ທ່ານ.)

5. ຫລັງຈາກທ່ານມີຄຸນສົມບັດໃຫ້ເປັນຕົວແທນກອງຊັບສິນ, ທ່ານຕ້ອງຍື່ນລາຍງານບັນຊີປີລະເທື່ອ (ຫລືຕາມໄລຍະທີ່ສານກຳນົດ) ຊຶ່ງສະແດງຊັບສິນທຸກຢ່າງທີ່ໄດ້ຮັບໃນປີນັ້ນ, ແລະຈຳນວນທີ່ທ່ານໄດ້ຈ່າຍ. ທ່ານຕ້ອງອະທິບາຍຢ່າງລະອຽດວ່າມີເຫລືອເທົ່າໃດຫລັງຈາກຫັກລາຍຈ່າຍ ("ຍອດບັນຊີທີ່ມີຢູ່").

6. ທ່ານຕ້ອງຮັບອະນຸຍາດຈາກສານເພື່ອຈະຂາຍ, ລົບລ້າງ, ຈຳນອງ, ຫລືລົງທຶນຊັບສິນຂອງກອງຊັບສິນ. ຕາມທັມມະດາ, ທະນາຍຄວາມຂອງທ່ານເປັນຜູ້ຮ້ອງຂໍການອະນຸຍາດດັ່ງກ່າວ.

## ສານຕັດສິນພິໄນກຳ

## ສານສູງ

## ຄຳແນະນຳທົ່ວໄປໃຫ້ແກ່ຕົວແທນກອງຊັບສິນ

(ຜູ້ປົກຄອງດູແລ, ຜູ້ປົກຄອງ, ຜູ້ອຳນວຍການ, ຫລືຜູ້ຈັດການພິໄນກຳ) (ຂໍໃຫ້ທະນາຍຄວາມຈົ່ງສົ່ງໄປໃຫ້ຕົວແທນ)

ທ່ານໄດ້ຖືກແຕ່ງຕັ້ງເປັນຕົວແທນກອງຊັບສິນໂດຍສານນີ້. ເມື່ອມີຄຸນສົມບັນເປັນຕົວແທນແລ້ວ, ທ່ານໄດ້ກາຍເປັນເຈົ້າໜ້າທີ່ຂອງສານແລະໄດ້ຮັບໜ້າທີ່ແລະການຜູກມັດບາງຢ່າງ. ທະນາຍຄວາມມີຄຸນສົມບັດດີທີ່ສຸດທີ່ຈະແນະນຳທ່ານກ່ຽວກັບເລື່ອງນີ້, ແຕ່ທ່ານຄວນເຂົ້າໃຈສິ່ງຕໍ່ໄປນີ້ຢ່າງຄັກແນ່:

1. ທ່ານຕ້ອງແຍກເງິນແລະຊັບສິນຂອງກອງຊັບສິນອອກຈາກຊັບສິນຂອງທ່ານເອງ, ແລະທ່ານຈະຕ້ອງບໍ່ປະສົມຊັບສິນນີ້ກັບຊັບສິນຂອງທ່ານເອງຫລືຊັບສິນອື່ນຈັກເທື່ອ. ເມື່ອທ່ານເປີດບັນຊີທະນາຄານສຳລັບເງິນນັ້ນ, ຈະຕ້ອງໃຊ້ຊື່ບັນຊີຕາມຊື່ກອງຊັບສິນ, ໂດຍຜູ້ຮັບມອບໝາຍ (ທ່ານເອງ). ໃບຄ້ຳປະກັນຂອງກອງຊັບສິນຕ້ອງໄວ້ໃນນາມຂອງກອງຊັບສິນອີກດ້ວຍ. ໃນການປົກຄອງເດັກທີ່ບໍ່ເຖິງກະສຽນ, ເມື່ອຕ້ອງຮັບຜິດຊອບເດັກຫລາຍກວ່າໜຶ່ງຄົນ, ທ່ານຕ້ອງເຮັດບັນຊີຊັບສິນສະເພາະເດັກແຕ່ລະຄົນຕ່າງຫາກແລະເກັບໃບຮັບເງິນແລະລາຍງານການຈ່າຍເງິນຈາກແຕ່ລະບັນຊີ. ຜູ້ທີ່ໄດ້ຄ້ຳປະກັນທ່ານທີ່ປະກັນກອງຊັບສິນຕໍ່ການເສັຍຫາຍອາດກຳນົດໃຫ້ຕົວແທນຂອງຕົນ, ຫລືທະນາຍຄວາມຂອງທ່ານ, ຮ່ວມກັບທ່ານໃນການເຊັນໃບເຊັກຫລືໃບຖອນເງິນຈາກທະນາຄານ.

2. ພໍ່ແມ່ບໍ່ມີສິດໃຊ້ຊັບສິນຂອງລູກທີ່ບໍ່ທັນເຖິງກະສຽນເພື່ອລ້ຽງລູກດັ່ງກ່າວນັ້ນ. ທາງສານອາດອະນຸຍາດໃຫ້ທ່ານຈ່າຍຄ່າບາງຢ່າງຈາກກອງເງິນຂອງ



## ການເປັນຜູ້ປົກຄອງແມ່ນຫຍັງ?

ຕັ້ງແຕ່ວັນທີ 1 ມົກກະຣາ 1981, ການເປັນຜູ້ປົກຄອງ ("guardianship") ມີຜົນໃຊ້ກັບຄົນທີ່ມີອາຍຸບໍ່ທັນເຕັມກະສຽນ**ເທົ່ານັ້ນ**, ຄືຄົນທີ່ມີອາຍຸຕ່ຳກວ່າສິບແປດ (18) ປີ. ຈຸດປະສົງຫລັກຂອງການຕັ້ງຜູ້ປົກຄອງແມ່ນການປ້ອງກັນເດັກທີ່ບໍ່ມີພໍ່ແມ່.

ກ່ອນປີ 1981, ການເປັນຜູ້ປົກຄອງ ("guardianship") ມີຜົນໃຊ້ກັບຄົນພິການຜູ້ໃຫຍ່ນຳແລະມີຄວາມໝາຍຄ້າຍຄືກັນກັບການເປັນຜູ້ປົກຄອງດູແລ ("conservatorship"). ການເປັນຜູ້ປົກຄອງ ("guardianship") ໃດໆສຳລັບຄົນພິການທີ່ມີຜົນໃຊ້ການໃນວັນທີ 1 ມົກກະຣາ 1981, ໄດ້ກາຍເປັນການປົກຄອງດູແລ ("conservatorship") **ໂດຍອັດຕະໂນມັດ**, ຖ້າຜູ້ຮັບການປົກຄອງນັ້ນມີອາຍຸ 18 ປີຂຶ້ນໄປໃນວັນທີ 1 ມົກກະຣາ 1981. ການປ່ຽນກ່ຽວກັບການເປັນຜູ້ປົກຄອງນີ້ເປັນສ່ວນໜຶ່ງໃນການດັດແປງກົດໝາຍແຫ່ງຣັດແຄລິຟໍເນັຍຢ່າງກວ້າງຂວາງ ດ້ານການເປັນຜູ້ປົກຄອງ ("guardianship") ແລະການປົກຄອງດູແລ ("conservatorship").

ນັບຕັ້ງແຕປີ 1981, ວິທີທາງກົດໝາຍທີ່ປ້ອງກັນຜູ້ໃຫຍ່ທີ່ມີອາການພິການໄດ້ມີແຕ່ການປົກຄອງດູແລທົ່ວໄປ ("general conservatorship") ແລະການປົກຄອງດູແລປະເພດຈຳກັດ ("limited conservatorship ") ເທົ່ານັ້ນ, ດັ່ງນັ້ນ, ປຶ້ມຄູ່ມືນີ້ຈຶ່ງຈະບໍ່ມີການອະທິບາຍເລື່ອງການເປັນຜູ້ປົກຄອງ ("guardianship") ອີກ.

## ການຕັ້ງຜູ້ປົກຄອງດູແລປະເພດຈຳກັດແມ່ນຫຍັງ?

ການປົກຄອງດູແລປະເພດຈຳກັດເປັນປະເພດໜຶ່ງຂອງການປົກຄອງດູແລທົ່ວໄປແລະມີຜົນໃຊ້ກັບຜູ້ໃຫຍ່ທີ່ມີອາການ "ພິການດ້ານການເຕີບໂຕ" ຕາມທີ່ກົດໝາຍຂອງຣັດກຳນົດໃຫ້[1], ແລະເປັນຜູ້ຮັບ ຫລືສາມາດໄດ້ຮັບບໍຣິການຈາກສູນກາງປະຈຳເຂດແຫ່ງຣັດແຄລິຟໍເນັຍທີ່ຮັບໃຊ້ປະຊາກອນຜູ້ມີອາການພິການດ້ານການເຕີບໂຕ. ການປ້ອງກັນທາງກົດໝາຍນີ້ມີ "ຂໍ້ຈຳກັດ" ເພາະຜູ້ໃຫຍ່ທີ່ມີອາການພິການດ້ານການເຕີບໂຕຍັງມີສິດໃຫ້ເບິ່ງແຍງຕົນເອງແລະ/ຫລືເກັບຮັກສາຊັບສິນເງິນທອງຂອງຕົນຂຶ້ນກັບຄວາມສາມາດທີ່ຕົນມີຕາມທີ່ສານໄດ້ກຳນົດໃຫ້. ການປົກຄອງດູແລປະເພດຈຳກັດໃຊ້ເພື່ອສົ່ງເສີມແລະປ້ອງກັນສະຫວັດດີພາບຂອງບຸກຄົນແລະມີເປົ້າໝາຍເພື່ອພັທນາການເພິ່ງຕົນເອງແລະການມີອິສະຣະໃຫ້ຫລາຍທີ່ສຸດ.

# ຄຳຖາມກ່ຽວກັບການຕັ້ງຄົນປົກຄອງດູແລ

## ການຕັ້ງຜູ້ປົກຄອງດູແລສຳຄັນເພາະເຫດໃດ?

ຖ້າທ່ານມີລູກທີ່ເປັນ**ຜູ້ໃຫຍ່**ແລ້ວທີ່ມີອາການພິການດ້ານການເຕີບໂຕ, ການຕັ້ງໃຫ້ທ່ານເປັນຜູ້ປົກຄອງດູແລອາດເຮັດໃຫ້ທ່ານມີສິດເວົ້າແທນລູກໄດ້, ຫລືໃຫ້ທ່ານມີບົດບາດໃນການຮັກສາເບິ່ງແຍງລູກ, ຊຶ່ງທັມມະດາແລ້ວ ທ່ານຈະບໍ່ມີສິດ.

ຖ້າທ່ານມີລູກທີ່ບໍ່ເຖິງກະສຽນ, ທ່ານເປັນຜູ້ດູແລຕາມທັມມະຊາດແລະໂດຍທົ່ວໄປ, ທ່ານມີສິດອຳນາດເທົ່າທຽມກັນກັບຜູ້ດູແລເດັກທີ່ສານແຕ່ງຕັ້ງ.

---

[1] "ອາການພິການດ້ານການເຕີບໂຕ" ໝາຍເຖິງອາການພິການທີ່ເກີດຂຶ້ນກ່ອນຜູ້ກ່ຽວຈະເຖິງອາຍຸ 18 ປີ, ຈະສືບຕໍ່ໄປ, ຫລືຄາດໝາຍວ່າຈະສືບຕໍ່ໄປຕລອດ, ແລະເຮັດໃຫ້ຜູ້ກ່ຽວຂາດສະມັດຕະພາບພໍສົມຄວນ. ອາການນີ້ຄວນລວມທັງອາການປັນຍາອ່ອນ, ຄວາມພິການທາງດ້ານສະໝອງຕັ້ງແຕ່ເກີດ, ບ້າໝູ, ແລະການ



## ພໍ່ແມ່ຈະກຳນົດໃຫ້ຈັດຕັ້ງຜູ້ປົກຄອງດູແລໃຫ້ມີຜົນບັງຄັບໃຊ້ຫລັງຈາກພວກເຂົາຕາຍແລ້ວໄດ້ຢ່າງໃດ?

ໃນພິໄນກຳ, ພໍ່ແມ່ຄວນສເນີຊື່ຜູ້ປົກຄອງດູແລລູກທີ່ຈະຖືກແຕ່ງຕັ້ງຫລັງຈາກພໍ່ແມ່ທັງສອງຕາຍແລ້ວ. ວິທີດຳເນີນການເພື່ອແຕ່ງຕັ້ງຜູ້ປົກຄອງດູແລແມ່ນວິທີດຽວກັນກັບການແຕ່ງຕັ້ງຜູ້ປົກຄອງດູແລຢ່າງອື່ນ, ເຖິງແມ່ນວ່າພໍ່ແມ່ພຽງແຕ່ສເນີຊື່ຜູ້ປົກຄອງດູແລເພື່ອຮັບໜ້າທີ່ສືບຕໍ່ຈາກພໍ່ແມ່ເອງ.

ຈະສເນີຊື່ຜູ້ປົກຄອງດູແລໂດຍທາງອື່ນນອກຈາກພິໄນກຳໄດ້. ເອກະສານໃດໆທີ່ເປັນລາຍລັກອັກສອນກໍມີຜົນບັງຄັບໃຊ້ທາງກົດໝາຍໃນການສເນີຊື່ຖ້າເປັນການສະແດງຄວາມຕັ້ງໃຈແລະພໍ່ແມ່ໄດ້ເຊັນຊື່ແລະລົງວັນທີ.

## ມີການຈັດການຢ່າງອື່ນນອກຈາກການເຮັດພິໄນກຳທີ່ພໍ່ແມ່ຄວນພິຈາຣະນາເຮັດໄວ້ເພື່ອລູກທີ່ມີອາການພິການບໍ?

ມີ. ເມື່ອພໍ່ແມ່ຕິດຕໍ່ການສົ່ງສະການສຳລັບໂຕເອງ, ພວກເຂົາຄວນພິຈາຣະນາຕິດຕໍ່ໃຫ້ລູກຄືກັນ. ແຜນການສົ່ງສະການໃດໆຄວນຂຽນໄວ້ໃນເອກະສານ, ຊຶ່ງຕາມທັມມະດາມີຫົວຂໍ້ວ່າ "ຄຳສັ່ງໃຫ້ຜູ້ປະຕິບັດພິໄນກຳຂອງຂ້າພະເຈົ້າ," ແລະເອົາໄວ້ໃສ່ຕູ້ນິຣະພັຍທີ່ທະນາຄານ. ເອກະສານນັ້ນຄວນມີຄຳແນະນຳກ່ຽວການຈັດການເພື່ອຮັກສາລູກຜູ້ນັ້ນທັນທີຫລັງຈາກພໍ່ແມ່ທັງສອງໄດ້ຕາຍ. ຕົວຢ່າງ: ຄຳແນະນຳກ່ຽວກັບຢາແລະບ່ອນພັກອາສັຍ.

**ໝາຍເຫດ: ຕໍ່ໄປນີ້ຄືຕົວຢ່າງຄຳແນະນຳສຳລັບຕົວແທນກອງຊັບສິນທີ່ສານໃນຣັດແຄລິຟໍເນັຍແຫ່ງໜຶ່ງໄດ້ໃຊ້. ຖ້າທ່ານສົນໃຈ, ກະຣຸນາຕິດຕໍ່ສານປະຈຳທ້ອງຖິ່ນແລະ/ຫລືຜູ້ສອບສວນຂອງສານເພື່ອຂໍລາຍລະອຽດໃນພື້ນທີ່ຂອງທ່ານ.**

ແລບັນຊີພິເສດ, ເພື່ອຄວບຄຸມຊັບສິນທີ່ພໍ່ແມ່ໄດ້ຍົກໃຫ້ແກ່ລູກຊາຍຫລືລູກສາວຜູ້ມີອາການພິການດ້ານການເຕີບໂຕ;

3. ການຈັດຕັ້ງຜູ້ປົກຄອງດູແລຊັບສິນຂອງຄົນທີ່ມີອາການພິການດ້ານການເຕີບໂຕເມື່ອຊັບສິນຂອງຜູ້ຮັບການດູແລນັ້ນມີພຽງແຕ່ການຊ່ວຍເຫລືອສາທາຣະນະເທົ່ານັ້ນ.

## ຜູ້ດູແລບັນຊີສາມາດຍິນຍອມການປິ່ນປົວທາງພະຍາບານແທນຜູ້ຮັບຜົນປະໂຫຍດແລະຄວບຄຸມເລື່ອງອື່ນນອກຈາກເລື່ອງການເງິນໄດ້ບໍ?

ບໍ່ໄດ້. ອຳນາດຂອງຜູ້ດູແລບັນຊີຈຳກັດສະເພາະການຄວບຄຸມການເງິນ. ຖ້າຕ້ອງມີການຄວບຄຸມດ້ານສ່ວນຕົວ, ຄວນຈັດຕັ້ງຜູ້ປົກຄອງດູແລເມື່ອພໍ່ແມ່ທັງສອງຕາຍ.

## ຜູ້ດູແລບັນຊີແລະຜູ້ປົກຄອງດູແລຄວນເປັນຄົນດຽວກັນບໍ?

ທາງທີ່ດີກໍ່ບໍ່ຄວນ. ການແຍກການຄວບຄຸມດ້ານການເງິນຈາກການປົກຄອງໂຕຄົນຈະເປັນການເຮັດໃຫ້ມີລະບົບການຕິຊົມສົມດຸນກັນ. ຜູ້ປົກຄອງດູແລຊັບສິນມີໜ້າທີ່ໄປຢ້ຽມຢາມຜູ້ຮັບການປົກຄອງໂດຍໂຕເອງ. ຖ້າມີຄວາມຈຳເປັນທີ່ຂາດການເອົາໃຈໃສ່, ຜູ້ປົກຄອງດູແລຊັບສິນຕ້ອງແຈ້ງຜູ້ດູແລບັນຊີ, ຊຶ່ງມີໜ້າທີ່ເບີກຖອນເງິນເພື່ອໃຊ້ຕາມເງື່ອນໄຂຂອງຄຳຕົກລົງຂອງບັນຊີເງິນພິເສດທີ່ເປັນລາຍລັກອັກສອນ. ຖ້າຜູ້ປົກຄອງດູແລບໍ່ປະຕິບັດໜ້າທີ່ຢ່າງຖືກຕ້ອງ, ຜູ້ດູແລບັນຊີກໍຈະຮູ້ໄດ້, ແລະທາງກົງກັນຂ້າມ, ຖ້າຜູ້ດູແລບັນຊີບໍ່ປະຕິບັດໜ້າທີ່ຢ່າງຖືກຕ້ອງ, ຜູ້ປົກຄອງດູແລຊັບສິນກໍຈະຮູ້ໄດ້ເຊັ່ນກັນ.

ເມື່ອພໍ່ແມ່ບໍ່ມີໂອກາດທີ່ຈະເລືອກຄົນໄດ້ຈາກຈຳນວນຫລາຍຄົນ, ຫລືຖ້າພໍ່ແມ່ເຊື່ອໝັ້ນຄົນໃດຄົນໜຶ່ງ, ຄົນນັ້ນກໍສາມາດຮັບໃຊ້ສອງໜ້າທີ່ໄດ້.



ເມື່ອລູກທ່ານເຖິງກະສຽນແລ້ວ, ເຂົາກໍພົ້ນຈາກການປົກຄອງຂອງທ່ານ. ທາງກົດໝາຍ**ຖືວ່າ**ບຸກຄົນນັ້ນມີຄວາມສາມາດໃຊ້ສິດຂອງຜູ້ໃຫຍ່ໄດ້, ໂດຍບໍ່ຄຳນຶງເຖິງອາການພິການຂອງເຂົາ.

ເມື່ອອາການພິການດ້ານການເຕີບໂຕຫລືດ້ານສະໝອງຈຳກັດຄວາມສາມາດຂອງຜູ້ໃຫຍ່ເພື່ອໃຊ້ສິດຂອງຕົນ, ຄົນນັ້ນອາດຕ້ອງການໃຫ້ຄົນອື່ນມາແທນຕົວໃນການໃຊ້ສິດຂອງຕົນບາງຢ່າງ. ການຕັ້ງພໍ່ແມ່ເປັນຜູ້ປົກຄອງດູແລຈະເຮັດໃຫ້ພໍ່ແມ່ສາມາດແທນຕົວລູກໄດ້ພາຍໃຕ້ການທົບທວນຈາກສານຕາມເວລາທີ່ກຳນົດ.

ການຕັ້ງໃຫ້ມີຜູ້ປົກຄອງດູແລມີຄວາມສຳຄັນທີ່ສຸດໃນເມື່ອຕ້ອງມີຜູ້ຍິນຍອມເຮັດການສະເພາະໃດໜຶ່ງ, ແລະຜູ້ມີປັນຍາອ່ອນຫລືອາການພິການດ້ານການເຕີບໂຕຢ່າງອື່ນບໍ່ສາມາດໃຫ້ອະນຸຍາດໄດ້. ຕົວຢ່າງ, ຄົນປ່ວຍໄດ້ "ຍິນຍອມໂດຍມີຄວາມເຂົ້າໃຈ" ກ່ອນທີ່ຈະຜ່າຕັດໄດ້. ຖ້າຫາກວ່າຜູ້ປ່ວຍເປັນ**ເດັກທີ່ບໍ່ເຖິງກະສຽນ**ທີ່ມີປັນຍາອ່ອນຫລືອາການພິການດ້ານການເຕີບໂຕຢ່າງອື່ນ, ໂດຍທົ່ວໄປແລ້ວ, ທ່ານໝໍແລະໂຮງໝໍຈະຍອມຮັບຄຳຍິນຍອມຈາກພໍ່ແມ່. ຖ້າຫາກວ່າຜູ້ປ່ວຍເປັນ**ຜູ້ໃຫຍ່**ທີ່ມີປັນຍາອ່ອນຫລືມີອາການພິການດ້ານການເຕີບໂຕຢ່າງອື່ນ, ຫລາຍເທື່ອໝໍຈະ**ບໍ່ຍອມ**ຮັບຄຳຍິນຍອມຈາກພໍ່ແມ່, ເວັ້ນໄວ້ແຕ່ພໍ່ແມ່ຖືກແຕ່ງຕັ້ງເປັນຜູ້ປົກຄອງດູແລຂອງຄົນປ່ວຍນັ້ນ. ທາງພໍ່ແມ່ສາມາດຍື່ນຄຳຮ້ອງຂໍຕໍ່ສານໃຫ້ອະນຸຍາດພໍ່ແມ່ເປັນຜູ້ຍິນຍອມໃຫ້ໄດ້ຮັບການປິ່ນປົວ, ໂດຍບໍ່ຈຳເປັນຈະແຕ່ງຕັ້ງໃຫ້ເປັນຜູ້ປົກຄອງດູແລ. ນອກຈາກນີ້, ໃນບາງກໍຣະນີ, ຫົວໜ້າສູນກາງເຂດສາມາດຍິນຍອມໃຫ້ຜູ້ຮັບບໍຣິການຂອງສູນກາງເຂດຮັບການປິ່ນປົວ.

ອຳນາດແລະໜ້າທີ່ຂອງຜູ້ປົກຄອງດູແລຈະໄດ້ອະທິບາຍໄວ້ໃນຄຳສັ່ງການແຕ່ງຕັ້ງແລະໃນກົດໝາຍທີ່ສະພາແຕ່ງຕັ້ງ. ການເຂົ້າໃຈຂອບເຂດອຳນາດ

---

ຫລືໂຕເອງ. ແລະອາການນີ້ຍັງຄວນລວມທັງອາການທີ່ເຮັດໃຫ້ຜູ້ກ່ຽວຂາດສະມັດຕະພາບທີ່ເຫັນວ່າຄ້າຍຄືກັນຫລາຍກັບອາການປັນຍາອ່ອນ, ຫລືທີ່ຈຳເປັນໄດ້ຮັບການປິ່ນປົວທີ່ຄ້າຍຄືກັນກັບບຸກຄົນປັນຍາອ່ອນຈຳເປັນໄດ້ຮັບ, ແຕ່ບໍ່ຄວນລວມອາການທີ່ເຮັດໃຫ້ຜູ້ກ່ຽວຂາດສະມັດຕະພາບດ້ານອື່ນໆທາງຮ່າງກາຍ. (ປະມວນກົດໝາຍວ່າດ້ວຍປະຊາສົງເຄາະແລະສຖາບັນ § 4512.)

ແລະໜ້າທີ່ນີ້ເປັນສິ່ງສຳຄັນໃນເມື່ອທ່ານຈະຕິດຕໍ່ກັບອົງການສາທາຣະນະຫລືກັບຜູ້ອຳນວຍການຂອງສຖານທີ່ພັກອາສັຍປະຈຳແລະສະຖານທີ່ຮັບດູແລປະຈຳວັນ. ຕົວຢ່າງ, ອາດຕ້ອງມີການແຈ້ງພໍ່ແມ່ຊຶ່ງເປັນຜູ້ປົກຄອງດູແລເພື່ອຂໍອະນຸຍາດປ່ຽນທີ່ຢູ່, ການສຶກສາຫລືການບໍລິການຟື້ນຟູໃໝ່.

## ຂ້າພະເຈົ້າຈະຮູ້ໄດ້ແນວໃດວ່າຈຳເປັນຕ້ອງມີການແຕ່ງຕັ້ງຜູ້ປົກຄອງດູແລ?

ການຕັດສິນໃຈວ່າຈະແຕ່ງຕັ້ງຜູ້ປົກຄອງດູແລຫລືບໍ່ຈະອີງຕາມຂໍ້ຄວາມຈິງຂອງກໍຣະນີທ່ານເອງ, ແລະທ່ານຄວນຫາຄຳແນະນຳຈາກທະນາຍຄວາມ. ຄຳຖາມທີ່ທ່ານຄວນຖາມເພື່ອຕັດສິນໃຈວ່າການແຕ່ງຕັ້ງຜູ້ປົກຄອງດູແລຈຳເປັນຫລືບໍ່, ແມ່ນ:

1. ມີການຕັດສິນໃຈໃດໆທີ່ມີຜົນຕໍ່ສະຫວັດດີພາບດ້ານການເງິນຂອງຄົນທີ່ມີອາການພິການດ້ານການເຕີບໂຕທີ່ເຂົາບໍ່ສາມາດຕັດສິນໃຈເອງໄດ້? ນອກຈາກການແຕ່ງຕັ້ງຜູ້ປົກຄອງດູແລ, ມີວິທີອື່ນທີ່ຈະຕັດສິນໃຈເອົາຢ່າງມີປະສິດທິພາບໄດ້ບໍ? ຕົວຢ່າງ, ຖ້າລາຍໄດ້ຂອງຄົນນັ້ນຈຳກັດພຽງແຕ່ເງິນ SSI, ການຈັດການການເງິນອາດເຮັດໄດ້ໂດຍແຕ່ງຕັ້ງຜູ້ຮັບເງິນແທນ.

2. ຄົນໃຫຍ່ຜູ້ມີປັນຍາອ່ອນຫລືມີອາການພິການດ້ານການເຕີບໂຕນັ້ນສາມາດເບິ່ງແຍງໂຕເອງໄດ້ຢ່າງເໝາະສົມທາງດ້ານສຸຂະພາບ, ອາຫານການກິນ, ເຄື່ອງນຸ່ງຫົ່ມແລະທີ່ພັກອາສັຍໄດ້ຫລືບໍ່?

3. ທ່ານໝໍປະຈຳຄອບຄົວຈະຍອມຮັບຄຳຍິນຍອມຈາກພໍ່ແມ່ຕໍ່ໄປເພື່ອປິ່ນປົວລູກຜູ້ມີປັນຍາອ່ອນຫລືມີອາການພິການດ້ານການເຕີບໂຕ, ເຖິງແມ່ນວ່າລູກນັ້ນເປັນຜູ້ໃຫຍ່ແລ້ວຫລືບໍ່?

4. ທາງສູນກາງເຂດທີ່ບໍລິການຄົນທີ່ມີອາການພິການດ້ານການເຕີບໂຕໄດ້ແນະນຳໃຫ້ແຕ່ງຕັ້ງຜູ້ປົກຄອງດູແລຫລືບໍ່?



## ຜູ້ໃດຄວນຮັບໃຊ້ເປັນຜູ້ດູແລບັນຊີເງິນເພື່ອຄວາມຈຳເປັນພິເສດ?

ບຸກຄົນຫລືທະນາຄານສາມາດເປັນຜູ້ດູແລບັນຊີໄດ້. ໃນບາງກໍຣະນີ, ບໍລິສັດທີ່ບໍ່ຫາຜົນກຳໄລອາດເປັນຜູ້ດູແລບັນຊີໄດ້.[2]

ຍ້ອນຜູ້ດູແລບັນຊີທີ່ເປັນບໍລິສັດ, ເຊັ່ນທະນາຄານ, ຈະເກັບຄ່າບໍລິການປະຈຳປີທີ່ເປັນເປີຣ໌ເຊັນທ໌ຂອງຊັບສິນທີ່ຢູ່ໃນບັນຊີເງິນພິເສດ, ໂດຍທົ່ວໄປນັ້ນການຕັ້ງສະມາຊິກຄອບຄົວຫລືໝູ່ທີ່ໃກ້ສິດໃຫ້ຮັບໃຊ້ເປັນຜູ້ດູແລບັນຊີກໍຈະປະຫຍັດກວ່າ. ຢ່າງໃດກໍດີ, ຄວນຮູ້ໄວ້ວ່າບຸກຄົນທີ່ຮັບໃຊ້ດູແລບັນຊີອາດມີສິດໄດ້ຮັບຄ່າບໍລິການ. ຜູ້ດູແລບັນຊີປະເພດບຸກຄົນອາດມີການພົວພັນຫລາຍກວ່າກັບກິດຈະກຳປະຈຳວັນຂອງຜູ້ຮັບຜົນປະໂຫຍດອີກດ້ວຍ.

ແຕ່ໃນທາງກົງກັນຂ້າມ, ໂດຍທົ່ວໄປແລ້ວ, ຜູ້ດູແລບັນຊີພິເສດປະເພດທະນາຄານແລະບໍລິສັດຕ່າງໆມັກມີປະສົບການທາງດ້ານການຄວບຄຸມເງິນແລະໃນການຈັດບັນຊີແລະລາຍງານພາສີຫລາຍກວ່າ.

ທາງທີສາມທີ່ເລືອກໄດ້ຄືໃຫ້ມີບຸກຄົນແລະທະນາຄານເປັນຜູ້ດູແລບັນຊີຮ່ວມກັນ. ການທີ່ຈະປະສົບຄວາມສຳເຣັດໃນການດູແລບັນຊີຮ່ວມກັນຈະຂຶ້ນກັບການຍິນຍອມຂອງທະນາຄານໃນການຮັບໃຊ້ໃນເລື່ອງນີ້ແລະຂຶ້ນກັບການແບ່ງໜ້າທີ່ກັນລະຫວ່າງຜູ້ຮ່ວມດູແລບັນຊີ.

## ໃນການວາງແຜນການເງິນສຳລັບຄົນທີ່ມີອາການພິການດ້ານການເຕີບໂຕ, ມັກມີການຜິດພາດຫຍັງ?

1. ການເອົາຊື່ຂອງລູກທີ່ມີອາການພິການດ້ານການເຕີບໂຕໃສ່ປະກັນພັຍຊີວິດເປັນຜູ້ຮັບຜົນປະໂຫຍດເບື້ອງຕົ້ນຫລືຄົນທີສອງ;

2. ການສເນີຊື່ຂອງຜູ້ປົກຄອງດູແລຊັບສິນ, ແທນການສເນີຊື່ຂອງຜູ້ດູ

## ຄວນຈັດຕັ້ງບັນຊີເງິນເພື່ອຄວາມຈຳເປັນພິເສດເມື່ອໃດ – ໃນເມື່ອພໍ່ແມ່ຍັງມີຊີວິດຢູ່ຫລືຕາຍແລ້ວ?

ຕາມທັມມະດາ, ແມ່ນໃຫ້ລໍຖ້າພໍ່ແມ່ທັງສອງຕາຍກ່ອນ, ແລ້ວຈິ່ງຕັ້ງຕົ້ນໃຊ້ບັນຊີເງິນເພື່ອຄວາມຈຳເປັນພິເສດ ກໍຈະດີກວ່າ. ຖ້າພໍ່ແມ່ຍັງມີຊີວິດຢູ່, ບັນຊີເງິນພິເສດນັ້ນບໍ່ມີຄວາມຈຳເປັນເພາະພໍ່ແມ່ຍັງສາມາດຊ່ວຍສິ່ງເສີມການຊ່ວຍເຫລືອສາທາຣະນະໄດ້. ຫລັກການທີ່ໃຊ້ກັນທົ່ວໄປຄື: ພໍ່ແມ່ທັງສອງຈະຂຽນໄວ້ໃນພິໄນກຳວ່າ ບັນຊີເງິນພິເສດນັ້ນຈະມີຜົນໃຊ້ໄດ້ແຕ່ເມື່ອພວກເຂົາຕາຍແລ້ວເທົ່ານັ້ນ.

ໃນບາງກໍຣະນີ, ການຈັດຕັ້ງບັນຊີເງິນພິເສດໃນລະຫວ່າງພໍ່ແມ່ຍັງມີຊີວິດຢູ່ອາດມີຄວາມຈຳເປັນ. ຕົວຢ່າງ, ຖ້າພໍ່ເຖົ້າແມ່ເຖົ້າຍົກເງິນກ້ອນໜຶ່ງໃຫ້ຫລານທີ່ມີອາການພິການດ້ານການເຕີບໂຕ, ອາດສົມຄວນຈັດຕັ້ງບັນຊີເງິນພິເສດ. ຈະຕ້ອງມີການແຕ່ງຕັ້ງຜູ້ປົກຄອງດູແລຊັບສິນ, ແລ້ວເຂົາຈະໂອນຊັບສິນດັ່ງກ່າວໃຫ້ແກ່ຜູ້ດູແລຊັບສິນເພື່ອເຂົ້າບັນຊີເງິນພິເສດຕາມຄຳຕົກລົງບັນຊີເງິນພິເສດທີ່ເປັນລາຍລັກອັກສອນ.

ຫລາຍເທື່ອ, ພໍ່ແມ່ໄດ້ຮັບການແນະນຳໃຫ້ຈັດຕັ້ງບັນຊີເງິນພິເສດປະເພດຈັດຕັ້ງກ່ອນຕາຍ (ບັນຊີເງິນພິເສດທີ່ຈັດຕັ້ງໃນເວລາຍັງມີຊີວິດຢູ່) ສຳລັບຕົວເອງເພື່ອຫລີກເວັ້ນການພິສູດມໍຣະດົກແລະປະຫຍັດຄ່າໃຊ້ຈ່າຍ. ຈະເອົາບັນຊີເງິນເພື່ອຄວາມຈຳເປັນພິເສດເຂົ້າຮ່ວມໃສ່ແຜນນີ້ໄດ້ງ່າຍແລະໂດຍທົ່ວໄປຈະມີຜົນບັງຄັບໃຊ້ເມື່ອຄູ່ຄອງຄົນໜຶ່ງຫລືທັງສອງຕາຍ.

---

[2] ເບິ່ງ Inland Counties Master Trust ທ່ານສາມາດຂໍຮັບລາຍລະອຽດໄດ້ຈາກສູນ Inland Counties Regional Center, P.O. Box 6127, San Bernardino, CA 92412.



## ຈະແຕ່ງຕັ້ງຜູ້ປົກຄອງດູແລໄດ້ຢ່າງໃດ?

ການດຳເນີນການແຕ່ງຕັ້ງຜູ້ປົກຄອງດູແລເລີ້ມຕົ້ນໂດຍການຍື່ນຄຳຮ້ອງຂໍຕໍ່ສານທີ່ຖືກຕ້ອງ, ຕາມທັມມະດາແມ່ນສານສູງຂອງເຄົານ໌ຕີ້ທີ່ຜູ້ທີ່ຖືກສເນີໃຫ້ໄດ້ຮັບການດູແລພັກອາສັຍຢູ່. ໃບແຈ້ງການພິຈາຣະນາເລື່ອງແລະສຳເນົາຂອງຄຳຮ້ອງຂໍຕ້ອງສົ່ງໂດຍທາງໄປສະນີໃຫ້ບາງຄົນແລະບາງອົງການທີ່ມີກຳນົດຢ່າງໜ້ອຍ 15 ວັນກ່ອນວັນທີຂອງການພິຈາຣະນາເລື່ອງ, ແລະຕ້ອງສົ່ງເອກະສານ, ທີ່ເອີ້ນວ່າໃບໝາຍເກາະ, ໃຫ້ເຖິງໂຕຂອງຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລ.

ຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລນັ້ນຕ້ອງເຂົ້າປະຊຸມການພິຈາຣະນາເລື່ອງເວັ້ນໄວ້ແຕ່ເຂົາ (1) ບໍ່ຢູ່ໃນຣັດເມື່ອໄດ້ຮັບໃບໝາຍເກາະ, (2) ມີການຮັບຮອງວ່າບໍ່ສາມາດເຂົ້າປະຊຸມ**ຍ້ອນອາການທາງພະຍາບານ**, ຫລື (3) ບໍ່ສມັກໃຈເຂົ້າປະຊຸມແລະບໍ່ໄດ້ຂັດຕໍ່ຄຳຮ້ອງຂໍ. ເຖິງແມ່ນວ່າຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລໄດ້ເຂົ້າປະຊຸມຫລືບໍ່ກໍຕາມ, ຜູ້ສອບສວນຂອງສານຕ້ອງສຳພາດຜູ້ທີ່ຖືກສເນີນັ້ນ ແລະໃນປະເດັນຕ່າງໆຈະຕ້ອງແຈ້ງເຂົາໃຫ້ຊາບເລື່ອງການດຳເນີນຂອງສານແລະພິຈາຣະນາເບິ່ງວ່າຜູ້ກ່ຽວສາມາດເຂົ້າປະຊຸມໄດ້ຫລືບໍ່, ວ່າຜູ້ກ່ຽວບໍ່ຍອມຮັບໃຫ້ມີການແຕ່ງຕັ້ງຜູ້ປົກຄອງດູແລແທນຫລືບໍ່, ວ່າຜູ້ກ່ຽວຈະບໍ່ຍອມຮັບບຸກຄົນທີ່ໄດ້ຖືກສເນີໃຫ້ແຕ່ງຕັ້ງເປັນຜູ້ປົກຄອງດູແລຂອງເຂົາຫລືບໍ່, ຫລືວ່າຜູ້ກ່ຽວຕ້ອງການທະນາຍຄວາມແທນຕົວເຂົາຫລືບໍ່. ຂໍ້ກຳນົດກ່ຽວກັບການສອບສວນແລະລາຍງານດັ່ງກ່າວນີ້ຈະຖືກຍົກເວັ້ນຖ້າຜູ້ກ່ຽວເຂົ້າປະຊຸມການພິຈາຣະນາເລື່ອງແລະເປັນຜູ້ຍື່ນຄຳຮ້ອງຂໍການແຕ່ງຕັ້ງຜູ້ປົກຄອງດູແລເອງຫລືເປັນຜູ້ສເນີຊື່ຂອງຜູ້ທີ່ຈະເປັນຜູ້ປົກຄອງດູແລ.

ກົດໝາຍບໍ່ໄດ້ກຳນົດວ່າຜູ້ທີ່ກຳລັງຂໍການແຕ່ງຕັ້ງຜູ້ປົກຄອງດູແລຕ້ອງມີທະນາຍຄວາມແທນຕົວ. ຢ່າງໃດກໍດີ, ເພາະເຫັນແກ່ຄວາມຫຍຸ້ງຍາກຂອງລະບຽບການຂອງສານແລະກົດລະບຽບຕ່າງໆຂອງສານ, ພ້ອມກັບການປ່ຽນແປງ

ກົດໝາຍຕ່າງໆໃນບໍ່ດົນມານີ້, ຝ່າຍໃດຝ່າຍໜຶ່ງອາດຕ້ອງການທະນາຍຄວາມຊ່ວຍດຳເນີນການເລື່ອງນີ້.

ເມື່ອໄດ້ແຕ່ງຕັ້ງຜູ້ປົກຄອງດູແລປະເພດພິສູດໂດຍສານ ("probate conservatorship") ແລ້ວ, ຈະບໍ່ຕ້ອງຕໍ່ອາຍຸແຕ່ມີອາຍຸຈົນເຖິງຜູ້ຮັບການປົກຄອງດູແລຕາຍຫລືຈົນເຖິງມີຄຳສັ່ງຈາກສານໃຫ້ສິ້ນອາຍຸ. ການຕາຍຂອງຜູ້ປົກຄອງດູແລປະເພດຈຳກັດຈະເຮັດໃຫ້ການພົວພັນໃນລະຫວ່າງຜູ້ປົກຄອງຈຳກັດ/ຜູ້ຮັບການປົກຄອງສິ້ນສຸດລົງ. ເພື່ອແຕ່ງຕັ້ງຜູ້ໃໝ່, ຕ້ອງຍື່ນຄຳຮ້ອງຂໍການແຕ່ງຕັ້ງຜູ້ປົກຄອງດູແລປະເພດຈຳກັດຜູ້ໃໝ່ແທນ.

ພາຍໃນ 90 ວັນຫລັງຈາກຖືກແຕ່ງຕັ້ງ, ຜູ້ປົກຄອງດູແລທຸກຄົນຕ້ອງຍື່ນແຜນທົ່ວໄປໃຫ້ສານແລະຜູ້ສອບສວນຂອງສານທີ່ອະທິບາຍຢ່າງລະອຽດວ່າຈະສຳເຣັດຄວາມຕ້ອງການດ້ານສ່ວນຕົວແລະດ້ານການເງິນຂອງຜູ້ຮັບການປົກຄອງດູແລໄດ້ຢ່າງໃດ. ຕ້ອງແຈ້ງທຸກຄົນທີ່ໄດ້ຮັບການແຈ້ງການຍື່ນຄຳຮ້ອງຂໍທຳອິດວ່າໄດ້ຍື່ນແຜນນັ້ນ. ທາງສານສາມາດນັດການພິຈາຣະນາເລື່ອງໄດ້ຖ້າເຫັນວ່າແຜນນັ້ນຈະບໍ່ໄດ້ຜົນປະໂຫຍດທີ່ດີທີ່ສຸດແກ່ຜູ້ຮັບການປົກຄອງດູແລຫລືຖ້າທາງສານໄດ້ຮັບຄຳຄັດຄ້ານແຜນພາຍໃນ 30 ວັນຫລັງຈາກວັນທີສົ່ງໃບແຈ້ງການຍື່ນແຜນ.

ຖ້າການແຕ່ງຕັ້ງຜູ້ປົກຄອງດູແລລວມທັງການຈັດການດູແລຊັບສິນ, ຈະຕ້ອງຍື່ນບັນຊີໃຫ້ກັບສານໃນທ້າຍຂອງປີທຳອິດຫລັງຈາກການແຕ່ງຕັ້ງ, ແລ້ວທຸກສອງປີຕໍ່ໄປ. ເຖິງແມ່ນວ່າຈະກຳນົດການລາຍງານການບັນຊີຫລືບໍ່ກໍຕາມ, ຜູ້ສອບສວນຂອງສານຕ້ອງສຳພາດຜູ້ຮັບການປົກຄອງດູແລອີກໃນທ້າຍຂອງປີທຳອິດທີ່ໄດ້ແຕ່ງຕັ້ງຜູ້ປົກຄອງດູແລຊັບສິນແລະທຸກສອງປີຕໍ່ໄປ. ຈຸດປະສົງຂອງການສຳພາດນີ້ຄືໃຫ້ພິຈາຣະນາວ່າການມີຜູ້ປົກຄອງຕູແລຊັບສິນຍັງມີຄວາມຈຳເປັນຫລືບໍ່ແລະວ່າຜູ້ປົກຄອງດູແລຊັບສິນໄດ້ດຳເນີນການໃຫ້ໄດ້ຜົນປະໂຫຍດທີ່ດີທີ່ສຸດໃຫ້ແກ່ຜູ້ຮັບການປົກຄອງດູແລຫລືບໍ່. ລາຍງານຂອງຜູ້ສອບສວນຈະຖືກສົ່ງໄປຫາສານໂດຍມີສຳເນົາໄປໃຫ້ຜູ້ປົກຄອງດູແລຊັບສິນຫລືທະນາຍຄວາມຂອງເຂົາ. ຜູ້



ປ່ຽນແປງກົດລະບຽບ SSI ທີ່ມີໃນກົດໝາຍວ່າດ້ວຍການເຮັດໃຫ້ຜູ້ໃຫ້ຄວາມອຸປະກາລະມີເອກະລາດຂອງປີ 1999 (H.R. 3443).

ດຽວນີ້ກົດລະບຽບຂອງທັງ Medi-Cal ແລະ SSI ເລັ່ງໃສ່ວ່າທາງຜູ້ຮັບຜົນປະໂຫຍດໄດ້ຈັດຕັ້ງບັນຊີເງິນພິເສດເອງ (ທີ່ເອີ້ນວ່າບັນຊີເງິນພິເສດ "ຈັດຕັ້ງໂດຍໂຕເອງ" ຫລື "ບຸກຄົນທີໜຶ່ງ). ຖ້າຜູ້ຮັບຜົນປະໂຫຍດໄດ້ຈັດຕັ້ງບັນຊີເງິນພິເສດເອງ, ຊັບສິນຂອງບັນຊີກໍຈະຖືວ່າເປັນແຫລ່ງທີ່ຜູ້ຮັບຜົນປະໂຫຍດສາມາດໃຊ້ໄດ້. ຖ້າຈຳນວນທັງໝົດຂອງແຫລ່ງເກີນ $2,000, ຜູ້ຮັບຜົນປະໂຫຍດຈະບໍ່ມີສິດໄດ້ຮັບ Medi-Cal.

ຖ້າຜູ້ຮັບຜົນປະໂຫຍດຫລືຜູ້ແທນຜູ້ຮັບຜົນປະໂຫຍດບໍ່ໄດ້ຈັດຕັ້ງບັນຊີເງິນພິເສດນັ້ນ (ເຊັ່ນບັນຊີເງິນພິເສດທີ່ພໍ່ແມ່ຈັດຕັ້ງເພື່ອລູກຊາຍຫລືລູກສາວ), ການກຳນົດວ່າຜູ້ຮັບຜົນປະໂຫຍດສາມາດໃຊ້ຊັບສິນຂອງບັນຊີຈະຂຶ້ນກັບວ່າຜູ້ຮັບຜົນປະໂຫຍດສາມາດຍົກເລີກບັນຊີຫລືຄວບຄຸມການເບີກຈ່າຍໄດ້ຫລືບໍ່. ຖ້າໄດ້, ຊັບສິນຂອງບັນຊີເງິນພິເສດນັ້ນກໍຖືວ່າເປັນແຫລ່ງທີ່ໃຊ້ໄດ້.

ມີບັນຊີເງິນພິເສດທີ່ຈັດຕັ້ງໂດຍໂຕເອງປະເພດໜຶ່ງທີ່ບໍ່ໄດ້ເຮັດໃຫ້ຜູ້ຮັບຜົນປະໂຫຍດເສັຍສິດທີ່ໄດ້ຮັບເງິນ SSI ແລະ Medi-Cal: ຄືບັນຊີເງິນພິເສດທີ່ສານສັ່ງໃຫ້ຈັດຕັ້ງສຳລັບຄົນພິການທີ່ມີອາຍຸຕໍ່າກວ່າ 65 ປີໃນເມື່ອຈັດຕັ້ງບັນຊີ ຖ້າໃນເມື່ອບັນຊີເງິນພິເສດໄດ້ໝົດອາຍຸແລ້ວທາງຣັດຈະຮັບເງິນຊົດເຊີຍຄືນສຳລັບຜົນປະໂຫຍດທີ່ທາງ Medi-Cal ໄດ້ຈ່າຍໃນໄລຍະທີ່ບັນຊີຍັງມີຢູ່.

ຕາມທັມມະດາ, ບັນຊີເງິນພິເສດທີ່ສານສັ່ງໃຫ້ຈັດຕັ້ງແມ່ນບັນຊີສຳລັບຄົນພິການທີ່ໄດ້ຮັບຄ່າຊົດເຊີຍການບາດເຈັບສ່ວນຕົວ. ກົດໝາຍຣັດແຄລິຟໍເນັຍອະນຸຍາດໃຫ້ກ້ອນເງິນດັ່ງກ່າວຖືກຝາກໄວ້ໃນບັນຊີເງິນເພື່ອຄວາມຈຳເປັນພິເສດສຳລັບໂຈດທີ່ພິການຖ້າຖືກຕ້ອງຕາມເງື່ອນໄຂທີ່ກຳນົດ.

ຖ້າລູກທ່ານກຳລັງຈະໄດ້ຮັບເງິນຈາກການຊະນະຄະດີ, ໃຫ້ຖາມທະນາຍຄວາມກ່ຽວກັບການຈັດຕັ້ງບັນຊີເງິນເພື່ອຄວາມຈຳເປັນພິເສດຕາມຄຳສັ່ງຂອງສານເພື່ອຝາກແລະຈັດການເງິນກ້ອນນັ້ນ.

ກັນເອງ, ເງິນກ້ອນນັ້ນຈະສືບທອດໄປຫາທາຍາດຂອງຜູ້ຕາຍອີງຕາມພີໄນກຳຂອງເຂົາ. ເພາະເຫດນີ້, ບັນຊີເງິນພິເສດປະເພດເປັນກັນເອງຈຶ່ງບໍ່ການໃຊ້ຫລາຍປານໃດ.

## ພໍ່ແມ່ຈະປ້ອງກັນຕໍ່ການປ່ຽນແປງກົດໝາຍກ່ຽວກັບສິດທີໄດ້ຮັບເງິນ SSI ໄດ້ຢ່າງໃດ?

ຕາມທັມມະດາຄວນເພີ້ມເງື່ອນໄຂພິເສດທີ່ຈະສັ່ງຜູ້ດູແລບັນຊີໃຫ້ໂອນຊັບສິນທັງໝົດຂອງບັນຊີໄປໃຫ້ຜູ້ດູແລບັນຊີເງິນພິເສດປະເພດເປັນກັນເອງຖ້າບັນຊີເງິນພິເສດເປັນທາງການຈະເຮັດໃຫ້ຜູ້ຮັບຜົນປະໂຫຍດເສັຍສິດທີໄດ້ຮັບເງິນ SSI ຫລືຜົນປະໂຫຍດສາທາຣະນະຢ່າງອື່ນ.

ອີກຢ່າງໜຶ່ງ, ພີໄນກຳຈະສາມາດດັດແປງເມື່ອໃດກໍໄດ້ກ່ອນເຈົ້າພີໄນກຳຕາຍ. ຖ້າມີການປ່ຽນແປງທາງກົດໝາຍໃນໄລຍະທີ່ເຈົ້າພີໄນກຳຍັງມີຊີວິດຢູ່, ເຂົາຈະສາມາດດັດແປງເງື່ອນໄຂຂອງບັນຊີເງິນພິເສດຕາມຄວາມຈຳເປັນໄດ້.

## ກົດລະບຽບກ່ຽວກັບສິດທີໄດ້ຮັບເງິນ SSI ຄືກັບກັບກົດລະບຽບຂອງ Medi-Cal ບໍ?

ເລີ້ມຕັ້ງແຕ່ວັນທີ 1 ມົກກະຣາ 2000, ກົດລະບຽບ SSI ກ່ຽວກັບບັນຊີເງິນພິເສດຈະຄ້າຍຄືກັນກັບກົດລະບຽບ Medi-Cal ຫລາຍກ່ຽວກັບບັນຊີເງິນພິເສດ.

ກ່ອນປີ 2000, ຄວາມແຕກຕ່າງກັນໃນລະຫວ່າງສອງໂຄງການນີ້ແມ່ນກົດລະບຽບກ່ຽວກັບການໂອນຊັບສິນ. ກ່ຽວກັບບັນຊີເງິນພິເສດທີ່ຈັດຕັ້ງກ່ອນວັນທີ 1 ມົກກະຣາ 2000, ຜູ້ຮັບເງິນ SSI (ແຕ່ບໍ່ແມ່ນຜູ້ຮັບຜົນປະໂຫຍດ Medi-Cal) ສາມາດຈັດຕັ້ງບັນຊີເງິນພິເສດໂດຍໃຊ້ຊັບສິນຂອງຕົນເອງໄດ້ແລະຈະບໍ່ເສັຍສິດໄດ້ຮັບເງິນ SSI. ແຕ່ຈະເຮັດແນວນັ້ນຕໍ່ໄປບໍ່ໄດ້ເພາະການ



ສອບສວນສາມາດໄປປ້ຽມຄົນອື່ນໄດ້ນອກຈາກຜູ້ຮັບການປົກຄອງດູແລເພື່ອພິຈາຣະນາວ່າຜູ້ປົກຄອງດູແລຊັບສິນກຳລັງດຳເນີນການໃຫ້ເປັນຜົນປະໂຫຍດທີ່ດີທີ່ສຸດໃຫ້ແກ່ຜູ້ຮັບການປົກຄອງດູແລ. ຜູ້ຮັບການປົກຄອງດູແລຕ້ອງເສັຍຄ່າໃຊ້ຈ່າຍຂອງເຄົານ໌ຕີ້ສຳລັບການສອບສວນເທື່ອທຳອິດແລະການສອບສວນທຸກເທື່ອຕໍ່ໄປ. ຢ່າງໃດກໍດີ, ຖ້າຜູ້ຮັບການປົກຄອງດູແລບໍ່ມີເງິນພຽງພໍທີ່ຈະເສັຍຄ່ານັ້ນໄດ້, ຫລືຖ້າການເສັຍຄ່ານັ້ນຈະສ້າງຄວາມຫຍຸ້ງຍາກ, ທາງສານສາມາດຍົກເວັ້ນຄ່ານັ້ນກໍໄດ້.

## ໃຜສາມາດເປັນຜູ້ປົກຄອງດູແລໄດ້?

ຜູ້ໃຫຍ່ຄົນໃດກໍໄດ້ສາມາດເປັນຜູ້ປົກຄອງດູແລ, ຖ້າສານແນ່ໃຈວ່າຜູ້ນັ້ນຈະດຳເນີນການໃຫ້ໄດ້ຜົນປະໂຫຍດອັນດີທີ່ສຸດສຳລັບຜູ້ຮັບການປົກຄອງດູແລ. ຖ້າມີການແຂ່ງຂັນສຳລັບຕຳແໜ່ງແລະຜູ້ສມັກມີຄຸນສົມບັດເທົ່າທຽມກັນ, ທາງກົດໝາຍຈະໃຫ້ເລືອກຕາມລຳດັບຕໍ່ລົງໄປນີ້: ຜູ້ທີ່ຜູ້ຮັບການປົກຄອງດູແລສະເນີ, ຄູ່ຄອງຂອງຜູ້ຮັບການປົກຄອງດູແລ, ລູກທີ່ພົ້ນກະສຽນຂອງຜູ້ຮັບການປົກຄອງດູແລ, ພໍ່ແມ່ຂອງຜູ້ຮັບການປົກຄອງດູແລ, ອ້າຍເອື້ອຍນ້ອງຂອງຜູ້ຮັບການປົກຄອງດູແລ. ອົງການເອກະຊົນທີ່ມີອາຊີບບໍຣິການຜູ້ປົກຄອງດູແລອາດຮັບໜ້າທີ່ນີ້ອີກດ້ວຍ, ແຕ່ຈຳເປັນຕ້ອງຍື່ນຄຳໃຫ້ການທຸກປີເລື່ອງປະຫວັດຂອງຄົນທີ່ທຳໜ້າທີ່ເປັນຜູ້ປົກຄອງດູແລ.

ອົງການບໍຣິສັດທີ່ບໍ່ຫາຜົນກຳໄລອາດຮັບໃຊ້ເປັນຜູ້ປົກຄອງດູແລຄົນຫລືຊັບສິນ, **ຫລືທັງສອງ**, ຖ້າທຳມະນູນຈັດຕັ້ງບໍຣິສັດໄດ້ອະນຸຍາດໃຫ້ຮັບການແຕ່ງຕັ້ງດັ່ງກ່າວແລະຖ້າບໍຣິສັດດັ່ງກ່າວເຄີຍບໍຣິການການຮັກສາ, ການປຶກສາຫລືການຊ່ວຍເຫລືອດ້ານການເງິນໃຫ້ແກ່ຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລພາຍໃຕ້ການຄວບຄຸມຂອງພະນັກງານສັງຄົມສົງເຄາະທີ່ມີທະບຽນ.

ຜູ້ປົກຄອງດູແລສອງຄົນຂຶ້ນໄປສາມາດຮັບໃຊ້ເປັນຜູ້ປົກຄອງດູແລຮ່ວມກັນກໍໄດ້. ຍ້ອນວ່າຕ້ອງມີຈຳນວນຜູ້ປົກຄອງດູແລເກີນກວ່າເຄິ່ງໜຶ່ງຈຶ່ງຈະດຳເນີນການໃດໆໄດ້, ການມີຜູ້ປົກຄອງດູແລຫລາຍກວ່າສອງຄົນມັກຈະບໍ່ສະດວກ. ຜົນປະໂຫຍດຂອງການມີຜູ້ປົກຄອງດູແລຫລາຍກວ່າຄົນໜຶ່ງແມ່ນ, ຖ້າຄົນໜຶ່ງຕາຍແລ້ວ, ຄົນທີ່ເຫລືອຍັງສາມາດດຳເນີນໜ້າທີ່ຕໍ່ໄປໄດ້ໂດຍບໍ່ຈຳເປັນຍື່ນຄຳຮ້ອງຂໍແຕ່ງຕັ້ງຜູ້ປົກຄອງດູແລຜູ້ໃໝ່.

## ຂ້າພະເຈົ້າຄວນພິຈາຣະນາການແຕ່ງຕັ້ງຜູ້ປົກຄອງດູແລເມື່ອໃດ?

ພໍ່ແມ່ອາດຢາກໄດ້ຄຳແນະນຳຈາກທະນາຍຄວາມກ່ຽວກັບການແຕ່ງຕັ້ງຜູ້ປົກຄອງດູແລເມື່ອສອງເຫດການ: (1) ເມື່ອລູກທີ່ມີປັນຍາອ່ອນຫລືມີອາການພິການດ້ານການເຕີບໂຕໄດ້ (ຫລືໃກ້ຈະເຖິງ) ອາຍຸ 18 ປີ, ແລະ (2) ເມື່ອພໍ່ແມ່ກຳລັງເຮັດພິໄນກຳ.

ການວາງແຜນການແຕ່ງຕັ້ງຜູ້ປົກຄອງດູແລເມື່ອລູກກຳລັງເຖິງອາຍຸ 18 ປີ ສຳຄັນຍ້ອນເຫດຜົນທີ່ໄດ້ອະທິບາຍແລ້ວ. ເມື່ອກຳລັງເຮັດພິໄນກຳ, ພໍ່ແມ່ຄວນພິຈາຣະນາການແຕ່ງຕັ້ງຜູ້ປົກຄອງດູແລໃນກໍຣະນີທີ່ຜູ້ພິການນັ້ນຈະຕ້ອງການຜູ້ປົກຄອງຫລັງຈາກພໍ່ແມ່ຕາຍແລ້ວ. ຖ້າເປັນດັ່ງນັ້ນ, ອາດໃຊ້ພິໄນກຳເພື່ອສເນີຊື່ຜູ້ປົກຄອງດູແລທີ່ຈະໄດ້ແຕ່ງຕັ້ງເມື່ອພໍ່ແມ່ທັງສອງໄດ້ຕາຍ. ເຖິງແມ່ນວ່າການສເນີຊື່ນັ້ນບໍ່ມີຜົນບັງຄັບທາງກົດໝາຍກໍຕາມ, ທາງສານຈະພຍາຍາມໝົດຄວາມສາມາດເພື່ອເຮັດຕາມພິໄນກຳວັ້ນໄວ້ແຕ່ທາງສານແນ່ໃຈວ່າການແຕ່ງຕັ້ງຜູປົກຄອງດູແລບໍ່ມີຄວາມຈຳເປັນຫລືຜູ້ທີ່ຖືກສເນີນັ້ນຈະບໍ່ດຳເນີນການໃຫ້ໄດ້ຜົນປະໂຫຍດອັນດີທີ່ສຸດໃຫ້ແກ່ຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລ.



ຟ້ອງ, ເພາະນະໂຍບາຍຂອງຣັຖບານສົ່ງເສີມໃຫ້ຊ່ວຍເຫລືອອົງການກຸສົນແລະສົ່ງເສີມການບໍຣິຈາກເງິນເພື່ອການກຸສົນ.

**4. ການຫ້າມການຕັ້ງກອງທຶນທີ່ໃຫຍ່ໂພດ** – ການຕັ້ງກອງທຶນໄວ້ໃນບັນຊີເງິນເພື່ອເພື່ອຄວາມຈຳເປັນພິເສດທີ່ມີຈຳນວນເກີນກວ່າຄວາມຈຳເປັນສຳລັບການສົ່ງເສີມຜົນປະໂຫຍດສາທາຣະນະຕລອດຊີວິດຂອງຜູ້ຮັບຜົນປະໂຫຍດອາດສົ່ງເສີມໃຫ້ເຈົ້າໜີ້ຟ້ອງເອົາເງິນຈາກບັນຊີ. ຈະບອກຈຳນວນເງິນທີ່ເໝາະສົມໃນປຶ້ມນ້ອຍນີ້ບໍ່ໄດ້ເພາະຈຳນວນນັ້ນຈະຂຶ້ນກັບສະຖານະການຂອງແຕ່ລະບຸກຄົນ. ການວາງແຜນການສືບທອດມໍຣະດົກກ່ຽວກັບເລື່ອງນີ້ມີຄວາມສັບຊ້ອນຫລາຍ, ຈຶ່ງຈຳເປັນທີ່ສຸດທີ່ຈະຫາຄຳແນະນຳທາງກົດໝາຍຈາກຜູ້ຊ່ຽວຊານ.

## ບັນຊີເງິນພິເສດປະເພດເປັນກັນເອງແມ່ນຫຍັງແລະຄວນໃຊ້ເມື່ອໃດ?

ແທ້ຈິງບັນຊີເງິນພິເສດປະເພດເປັນກັນເອງບໍ່ແມ່ນປັນຊີເງິນພິເສດເລີຍ. ບັນຊີນັ້ນເປັນພຽງແຕ່ຂອງຂວັນທີ່ເອົາໃຫ້ຄົນອື່ນໂດຍແຈ້ງຄວາມຕັ້ງໃຈກ່ຽວກັບການໃຊ້ຊັບສິນນັ້ນ. ຕົວຢ່າງ, ຖ້າພໍ່ແມ່ມີຄວາມເປັນຫ່ວງວ່າກົດໝາຍກ່ຽວກັບສິດທິໄດ້ຮັບເງິນ SSI ອາດປ່ຽນແປງຕາມພາຍຫລັງຈຶ່ງເຮັດໃຫ້ເງິນທີ່ຢູ່ໃນບັນຊີເງິນພິເສດປະເພດໃຊ້ດຸນພິນິດໄດ້ກາຍເປັນແຫລ່ງທີ່ນັບໄດ້, ພໍ່ແມ່ອາດຍົກເງິນກ້ອນທີ່ຈະເຂົ້າບັນຊີເງິນພິເສດນັ້ນໃຫ້ແກ່ອ້າຍເອື້ອຍນ້ອງຜູ້ໜຶ່ງຂອງຜູ້ທີ່ມີອາການພິການດ້ານການເຕີບໂຕແທນ. ພິໄນກຳຈະມີຄຳຮ້ອງຂໍໃຫ້ຄົນດັ່ງກ່າວຮັກສາເງິນກ້ອນນັ້ນໄວ້ເພື່ອຜົນປະໂຫຍດຂອງລູກທີ່ມີອາການພິການ.

ເຖິງແມ່ນວ່າບັນຊີເງິນພິເສດປະເພດເປັນກັນເອງຈະບັນລຸເປົ້າໝາຍການມີສິດທິໄດ້ຮັບເງິນ SSI ກໍຕາມ, ຄຳຮ້ອງຂໍນັ້ນໃຊ້ບັງຄັບທາງກົດໝາຍບໍ່ໄດ້. ອີກຢ່າງໜຶ່ງ, ຜູ້ຮັກສາເງິນກ້ອນນີ້ຕ້ອງເສັຍພາສີລາຍໄດ້ທີ່ມາຈາກຊັບສິນນີ້, ແລະເຈົ້າໜີ້ຂອງຜູ້ຮັກສາເງິນສາມາດຟ້ອງເອົາເງິນກ້ອນນີ້ກໍໄດ້. ຂໍ້ສຸດທ້າຍ, ຖ້າຜູ້ຮັກສາບັນຊີເງິນນີ້ຕາຍກ່ອນຜູ້ຮັບຜົນປະໂຫຍດບັນຊີເງິນພິເສດປະເພດເປັນ

ຕົວຢ່າງວິທີຊ່ວຍການບັນລຸເປົ້າໝາຍໃນເລື່ອງນີ້ຄື:

1. **ຂໍ້ກຳນົດຄວາມຈຳເປັນພິເສດ** – ນອກຈາກການມີຂໍ້ກຳນົດການເບີກຈ່າຍຕາມດຸນພິນິດທີ່ໄດ້ຈັດຕັ້ງຢ່າງຖືກຕ້ອງແລ້ວ, ທາງທີ່ດີແມ່ນຄວນແຈ້ງຜູ້ດູແລບັນຊີວ່າ ຈຸດປະສົງຂອງບັນຊີຄືສິ່ງເສີມ, ບໍ່ແມ່ນທົບແທນ, ຜົນປະໂຫຍດຂອງການຊ່ວຍເຫລືອສາທາລະນະທີ່ຜູ້ຮັບຜົນປະໂຫຍດໄດ້ຮັບ.

ເອກະສານການແຕ່ງຕັ້ງບັນຊີເງິນພິເສດກຳນົດຄວາມໝາຍຂອງ "ຄວາມຈຳເປັນພິເສດ" ວ່າເປັນສິ່ງທີ່ຈຳເປັນເພື່ອຮັກສາສຸຂະພາບ, ຄວາມປອດພັຍ, ແລະສະຫວັດດີພາບຂອງຜູ້ຮັບຜົນປະໂຫຍດ, ຊຶ່ງຕາມດຸນພິນິດຂອງຜູ້ດູແລບັນຊີເຫັນວ່າຜູ້ກ່ຽວບໍ່ໄດ້ຮັບຈາກອົງການສາທາລະນະໃດໆ. ໂດຍການຈຳກັດອຳນາດຂອງຜູ້ດູແລບັນຊີໃຫ້ເບີກຈ່າຍເພື່ອ "ຄວາມຈຳເປັນພິເສດ" ຂອງຜູ້ຮັບຜົນປະໂຫຍດເທົ່ານັ້ນ, ພໍ່ແມ່ສາມາດຮັບຮອງວ່າຜູ້ດູແລບັນຊີຈະຄົ້ນຫາແຫລ່ງສາທາລະນະຢ່າງລອບຂອບກ່ອນຈະເບີກຈ່າຍເພື່ອຄວາມຈຳເປັນໃດໆ. ຂໍ້ກຳນົດນີ້ຈະຊ່ວຍຜູ້ດູແລບັນຊີໃນການປ້ອງກັນບັນຊີເງິນພິເສດຕາມພື້ນຖານນະໂຍບາຍສາທາລະນະໄດ້ຖ້າຖືກອົງການສາທາລະນະຟ້ອງ.

2. **ຂໍ້ກຳນົດແບ່ງຜົນ** – ວິທີດັດແປງບັນຊີເງິນພິເສດປະເພດໃຊ້ດຸນພິນິດມາຕະຖານອີກວິທີໜຶ່ງ ຄືໃຫ້ມີຜູ້ຮັບຜົນປະໂຫຍດຫລາຍຄົນແລະໃຫ້ອະນຸຍາດຜູ້ດູແລບັນຊີໃຫ້ "ຫົດ" (ແບ່ງຜົນ) ເງິນຂອງບັນຊີເງິນພິເສດໃຫ້ຜູ້ຮັບຜົນປະໂຫຍດຕ່າງໆເຫລົ່ານັ້ນ. ຖ້າເຈົ້າໜີ້ຂອງຜູ້ຮັບຜົນປະໂຫຍດຜູ້ມີອາການພິການດ້ານການເຕີບໂຕຫາກພະຍາຍາມຟ້ອງເອົາເງິນຈາກບັນຊີເງິນພິເສດນັ້ນ, ເຂົາຈະເປັນຝ່າຍເສັຍປຽບເພາະວ່າມີຜູ້ຮັບຜົນປະໂຫຍດຈາກບັນຊີນັ້ນອີກຫລາຍຄົນທີ່ບໍ່ເປັນໜີ້ກັບເຂົາ.

3. **ການມອບຊັບສິນທີ່ເຫລືອໃຫ້ແກ່ອົງການກຸສົນ** – ການສົ່ງໂອນທຶນທີ່ເຫລືອໃນບັນຊີເງິນພິເສດໃຫ້ກັບອົງການກຸສົນທີ່ຮັບໃຊ້ຄົນທີ່ມີອາການພິການດ້ານການເຕີບໂຕຫລັງຈາກຜູ້ຮັບຜົນປະໂຫຍດຕາຍອາດເປັນການກີດກັ້ນບໍ່ໃຫ້ມີການ



## ຂ້າພະເຈົ້າຈະຫາທະນາຍຄວາມທີ່ມີຄວາມຊຳນານໃນເລື່ອງນີ້ໄດ້ຢ່າງໃດ?

ໃຫ້ຕິດຕໍ່ສະມາຄົມປະຊາກອນທີ່ມີປັນຍາອ່ອນ (ARC) ປະຈຳທ້ອງຖິ່ນຂອງທ່ານ. ສະມາຄົມສ່ວນຫລາຍຮູ້ຈັກຊື່ທະນາຍຄວາມທີ່ຢູ່ໃນເຂດຂອງຕົນທີ່ມີປະສົບການໃນການແນະນຳພໍ່ແມ່ທີ່ມີລູກປັນຍາອ່ອນຫລືມີອາການພິການດ້ານການເຕີບໂຕ. ຖ້າທ່ານຍັງຫາບໍ່ໄດ້, ມີສະມາຄົມທະນາຍຄວາມປະຈຳເທສບານແລະຄລີນິກຫລາຍແຫ່ງທີ່ມີຄມະກຳມະການສົ່ງຕໍ່ໃຫ້ພົບທະນາຍຄວາມ.

# ການປ່ຽນແປງໃຫຍ່ໃນການແຕ່ງຕັ້ງຜູ້ປົກຄອງດູແລທີ່ເກີດຈາກການແກ້ໄຂປະມວນກົດໝາຍວ່າດ້ວຍການພິສູດພິໄນກຳຂອງປີ 1979 ແລະ 1980

## A. ການປົກຄອງດູແລປະເພດຈຳກັດ

### ມີອຳນາດໃດທີ່ຈຳກັດ?

ເໝືອນຜູ້ປົກຄອງດູແລທົ່ວໄປ, ຜູ້ປົກຄອງດູແລປະເພດຈຳກັດມີໜ້າທີ່ເບິ່ງແຍງ, ປົກຄອງແລະຄວບຄຸມຜູ້ຮັບການປົກຄອງດູແລຍົກເວັ້ນແຕ່**ບໍ່ມີ**ອຳນາດຫລືສິດຄວບຄຸມໃນເລື່ອງຕໍ່ລົງໄປນີ້, **ນອກຈາກໄດ້ມີການຮ້ອງຂໍສະເພາະ**ໃນຄຳຮ້ອງຂໍແລະໄດ້ຮັບການອະນຸຍາດສະເພາະຕາມຄຳສັ່ງຂອງສານ:

1. ການຕັດສິນໃຈວ່າຜູ້ຮັບການປົກຄອງດູແລປະເພດຈຳກັດຈະຢູ່ບ່ອນໃດ;

2. ການມີສິດກວດເບິ່ງປະຫວັດລັບຂອງຜູ້ຮັບການປົກຄອງດູແລປະເພດຈຳກັດ;

3. ການຄວບຄຸມສິດຂອງຜູ້ຮັບການປົກຄອງດູແລປະເພດຈຳກັດໃນການແຕ່ງງານ;

4. ການຄວບຄຸມສິດຂອງຜູ້ຮັບການປົກຄອງດູແລປະເພດຈຳກັດໃນການເຮັດສັນຍາ;

5. ການຍິນຍອມໃຫ້ຜູ້ຮັບການປົກຄອງດູແລປະເພດຈຳກັດໄດ້ຮັບການປິ່ນປົວທາງພະຍາບານ;

6. ການຄວບຄຸມການຕິດຕໍ່ແລະການພົວພັນທາງສັງຄົມແລະທາງເພດຂອງຜູ້ຮັບການປົກຄອງດູແລປະເພດຈຳກັດ;

7. ການຕັດສິນໃຈກ່ຽວກັບການສຶກສາຂອງຜູ້ຮັບການປົກຄອງດູແລປະເພດຈຳກັດ.

ຢ່າງໃດກໍດີ, ຜູ້ປົກຄອງດູແລປະເພດຈຳກັດທຸກຄົນຈຳເປັນຕ້ອງຫາການຟື້ນຟູຫລືປິ່ນປົວ, ການຝຶກຝົນ, ການສຶກສາ, ການບໍລິການທາງດ້ານພະຍາບານແລະຈິດວິທຍາ, ແລະໂອກາດທາງສັງຄົມແລະອາຊີບຕາມເໝາະສົມໃຫ້ແກ່ຜູ້ຮັບການດູແລປະເພດຈຳກັດແລະເທົ່າທີ່ຈະຊ່ວຍຜູ້ຮັບການດູແລປະເພດຈຳກັດໃນການພັທນາການເພິ່ງໂຕເອງແລະອິດສະຣະພາບໃຫ້ຫລາຍທີ່ສຸດ.

ເມື່ອໃດທີ່ຄຳຮ້ອງຂໍການແຕ່ງຕັ້ງຜູ້ປົກຄອງດູແລອ້າງວ່າຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລນັ້ນບໍ່ມີຄວາມສາມາດຍິນຍອມການປິ່ນປົວທາງພະຍາບານໂດຍມີຄວາມຮູ້ໄດ້ ແລະທີ່ຂໍສານໃຫ້ມອບອຳນາດຝ່າຍດຽວໃນເລື່ອງນັ້ນໃຫ້ແກ່ຜູ້ທີ່ຖືກສເນີໃຫ້ເປັນຜູ້ປົກຄອງດູແລ, ຄຳຮ້ອງຂໍຕ້ອງມີໜັງສືຢັ້ງຢືນຈາກທ່ານໝໍວ່າຜູ້ກ່ຽວບໍ່ສາມາດຍິນຍອມການປິ່ນປົວທາງພະຍາບານແບບໃດໆໂດຍມີຄວາມຮູ້. ນອກຈາກນີ້, ຜູ້ປົກຄອງດູແລປະເພດຈຳກັດຂອງຊັບສິນຈະມີອຳນາດຄວບຄຸມແຕ່ຊັບສິນຂອງຜູ້ຮັບການປົກຄອງດູແລປະເພດຈຳກັດຊຶ່ງບົ່ງໄວ້ໃນຄຳສັ່ງແຕ່ງຕັ້ງຜູ້ປົກຄົງດູແລເທົ່ານັ້ນ.



**ຊັບສິນຢູ່ໃນບັນຊີເງິນພິເສດປະເພດໃຊ້ດຸນພິນິດ, ທາງຣັດແຄລີຟໍເນັຍຈະມີສິດຮຽກຮ້ອງໃຫ້ຊົດເຊີຍຄ່າໃຊ້ຈ່າຍໃນການຮັກສາຜູ້ກ່ຽວໃນສະຖາບັນຜູ້ພິການຈາກຊັບສິນຢູ່ໃນບັນຊີພິເສດນັ້ນໄດ້ບໍ?**

ບໍ່. ຕາມຄວາມເຫັນຂອງຜູ້ແຕ່ງເລື່ອງນີ້, ບັນຊີເງິນພິເສດປະເພດໃຊ້ດຸນພິນິດທີ່ໄດ້ຈັດຕັ້ງຂື້ນຢ່າງຖືກຕ້ອງໜ້າຈະປ້ອງກັນກ້ອນເງິນໃດໆທີ່ຢູ່ໃນບັນຊີເງິນພິເສດນັ້ນຈາກການຮຽກຮ້ອງການຊົດເຊີຍຄ່າໃຊ້ຈ່າຍຂອງການຮັກສາຕາມສະຖາບັນຂອງຣັດ, ເວັ້ນໄວ້ແຕ່ກໍຣະນີຕໍ່ລົງໄປນີ້.

ປະມວນກົດໝາຍວ່າດ້ວຍການພິສູດພີໄນກຳແຫ່ງຣັດແຄລີຟໍເນັຍໝວດ 15306 ກຳນົດວ່າຕົ້ນທຶນຂອງບັນຊີເງິນພິເສດປະເພດໃຊ້ດຸນພິນິດບໍ່ຢູ່ໃຕ້ການຮຽກຮ້ອງການຊົດເຊີຍໃຫ້ແກ່ຣັດຖ້າໄດ້ແຕ່ງຕັ້ງບັນຊີເງິນພິເສດໃຫ້ແກ່ຄົນທີ່ມີອາການພິການຊຶ່ງເປັນອາການພິການຢ່າງຮ້າຍແຮງ, ຊຶ່ງເຮັດໃຫ້ຜູ້ກ່ຽວມີຄວາມສາມາດບໍ່ພຽງພໍເພື່ອຮັກສາລ້ຽງຫລືປົກຄອງໂຕເອງໄດ້.

ໝວດ 15306 ຖືກດັດແປງໃໝ່ທີ່ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ມົກກະຣາ 1990 ເພື່ອແກ້ການປ້ອງກັນນີ້ບາງສ່ວນ. ສະຫລຸບຄວາມຂອງຂໍ້ດັດແປງນີ້ກຳນົດວ່າການປ້ອງກັນຂອງໝວດ 15306 ຈະບໍ່ມີຜົນປ້ອງກັນຕໍ່ບັນຊີເງິນພິເສດທີ່ເຮັດໃຫ້ຜູ້ຮັບຜົນປະໂຫຍດບໍ່ມີສິດໄດ້ຮັບ Medi-Cal.

ສຳລັບຄົນທີ່ກຳລັງໄດ້ຮັບ SSI, ຂໍ້ດັດແປງບໍ່ກ່ຽວຂ້ອງເພາະບຸກຄົນນັ້ນມີສິດໄດ້ຮັບ Medi-Cal ຢ່າງອັດຕະໂນມັດຢູ່ແລ້ວ. ບຸກຄົນໃດທີ່ອາສັຍໃນສູນກາງພັທນາຂອງຣັດຫລືເຄົ້າມ໌ຕີ້ໃດໆທີ່ບໍ່ຮັບທຶນຊ່ວຍເຫລືອ Medicaid, ໃນສະຖາບັນພະຍາບານທີ່ມີຄວາມຊຳນານ, ຫລືໃນສະຖາບັນຮັກສາລະຍະປານກາງ ກໍຈະບໍ່ສາມາດໄດ້ຮັບເງິນ SSI ຢ່າງໃດ. ເພື່ອປ້ອງກັນບັນຊີເງິນພິເສດຂອງຄົນເຫລົ່ານີ້, ພວກເຂົາຕ້ອງພິສູດສິດທີໄດ້ຮັບ Medi-Cal ໂດຍບໍ່ໃຫ້ສິດນັ້ນຂື້ນກັບການໄດ້ຮັບເງິນ SSI ຈຳນວນໃດໆ, ແຕ່ໃຫ້ພິສູດຕາມລະບຽບທີ່ເຂັ້ມງວດກວ່າຂອງ Medi-Cal ກ່ຽວກັບການມີບັນຊີເງິນພິເສດ.

ເງິນທີ່ຜູ້ຮັບເງິນ SSI ໄດ້ຮັບພາຍໃນເດືອນໃດກໍຖືວ່າເປັນລາຍໄດ້ສຳລັບເດືອນນັ້ນ. ເງິນທີ່ເຫລືອຂອງເດືອນນີ້ຈະຖືວ່າເປັນແຫລ່ງເງິນຂອງຕົ້ນເດືອນຕໍ່ໄປ. ຖ້າແຫລ່ງຂອງຜູ້ຮັບຜົນປະໂຫຍດທີ່ຢູ່ນອກບັນຊີເງິນພິເສດມີເກີນກຳນົດຂອງ SSI (ໃນປັດຈຸບັນນີ້ເປັນ $2,000 ສຳລັບຄົນໂສດ), ເງິນ SSI ຈະຖືກໂຈະໄວ້. ຖ້າລາຍໄດ້ທີ່ບໍ່ໄດ້ຫາມາທີ່ໄດ້ຮັບໃນເດືອນໃດໆຈາກບັນຊີເງິນພິເສດແລະຈາກແຫລ່ງອື່ນໆ (ເຊັ່ນຜົນປະໂຫຍດການປະກັນສັງຄົມສຳລັບເດັກພິການທີ່ເປັນຜູ້ໃຫຍ່ແລ້ວ) ໄດ້ເກີນຈຳນວນຜົນປະໂຫຍດ SSI ທີ່ຮັບປະຈຳລວມທັງລາຍໄດ້ $20 ທີ່ບໍ່ໄດ້ຫາມາທີ່ມີສິດຍົກເວັ້ນ, ເງິນ SSI ກໍຈະຖືກໂຈະໄວ້ຄືກັນ.

ເມື່ອຖືກໂຈະໄວ້ແລ້ວ, ເງິນ SSI ຈະເລີ້ມໄດ້ຮັບໃໝ່ໄດ້ໃນເດືອນໃດທີ່ລາຍໄດ້ແລະແຫລ່ງຢູ່ພາຍໃນຂໍ້ຈຳກັດຂອງ SSI. ຢ່າງໃດກໍດີ, ຖ້າມີການໂຈະເຖິງ 12 ເດືອນຂຶ້ນໄປ, ຈະຕ້ອງເຮັດໃບສມັກໃໝ່.

ການຖືກຕັດຫລືໂຈະເງິນ SSI ອາດເຮັດໃຫ້ຜົນປະໂຫຍດ Medi-Cal ແລະຜົນປະໂຫຍດການບໍຣິການການສນັບສນູນພາຍໃນເຮືອນຖືກຕັດອີກດ້ວຍ.

## ຫລັງຈາກຜູ້ຮັບຜົນປະໂຫຍດຕາຍ, ຊັບສິນທີ່ຢູ່ໃນບັນຊີເງິນພິເສດຈະເປັນແນວໃດ?

ເງື່ອນໄຂຂອງບັນຊີເງິນພິເສດຈະຄວບຄຸມການຈຳໜ່າຍຊັບສິນຂອງບັນຊີເງິນພິເສດຫລັງຈາກຜູ້ຮັບຜົນປະໂຫຍດຕາຍ. ຕາມທັມມະດາ, ພໍ່ແມ່ຈະໃຫ້ເງິນທີ່ເຫລືອໃນບັນຊີເງິນພິເສດຖືກຈຳໜ່າຍໃຫ້ແກ່ລູກຄົນອື່ນໆທີ່ຍັງມີຊີວິດຢູ່, ຖ້າມີ, ຫລືໃຫ້ແກ່ຫລານໆຂອງເຂົາ.



## ທາງສູນກາງເຂດມີບົດບາດຫຍັງກ່ຽວກັບການປົກຄອງດູແລປະເພດຈຳກັດ?

ໃນການປົກຄອງດູແລທຸກຣາຍການທີ່ກ່ຽວກັບຄົນທີ່ມີອາການພິການດ້ານການເຕີບໂຕ (ພາຍໃຕ້ການຍິນຍອມຂອງຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລ) ສູນກາງເຂດທີ່ເໝາະສົມຕ້ອງທຳການປະເມີນຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລແລະຍື່ນລາຍງານຕໍ່ສານ. ລາຍງານນັ້ນຕ້ອງບອກປະເພດແລະລະດັບຄວາມພິການຂອງຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລແລະເລື່ອງທີ່ຜູ້ກ່ຽວອາດຕ້ອງໄດ້ຮັບການຊ່ວຍເຫລືອຢ່າງລະອຽດ. ທາງສູນກາງເຂດຈະເສັຍຄ່າການປະເມີນນີ້ເອງ. ຈະຕ້ອງສົ່ງສຳເນົາລາຍງານຂອງສູນກາງເຂດໄປໃຫ້ຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລແລະໃຫ້ຜູ້ທີ່ໄດ້ຍື່ນຄຳຮ້ອງຂໍແລະ/ຫລືໃຫ້ທະນາຍຄວາມຂອງຝ່າຍໃດຝ່າຍໜຶ່ງ ພາຍໃນຢ່າງໜ້ອຍຫ້າວັນກ່ອນການພິຈາຣະນາ.

## ຈະສາມາດແຕ່ງຕັ້ງຜູ້ປົກຄອງດູແລປະເພດທົ່ວໄປແທນທີ່ຈະແຕ່ງຕັ້ງຜູ້ປົກຄອງດູແລປະເພດຈຳກັດສຳລັບຄົນທີ່ມີອາການພິການດ້ານການເຕີບໂຕໄດ້ບໍ?

ໄດ້. ທາງສານມີສິດວິນິໄສແຕ່ງຕັ້ງຜູ້ປົກຄອງດູແລປະເພດທົ່ວໄປສຳລັບຜູ້ໃຫຍ່ທີ່ມີອາການພິການດ້ານການເຕີບໂຕທີ່ຂາດຄວາມສາມາດໃນການດຳເນີນການ "ທຸກສິ່ງທີ່ຈຳເປັນເພື່ອເບິ່ງແຍງຄວາມຈຳເປັນສ່ວນຕົວທາງດ້ານສຸຂະພາບຮ່າງກາຍ, ອາຫານການກິນ, ເຄື່ອງນຸ່ງຫົ່ມ, ທີ່ພັກອາສັຍ, ແລະການຄວບຄຸມຊັບສິນເງິນທອງຂອງຕົນ." ຖ້າສານວິນິໄສເຫັນວ່າຜູ້ທີ່ຖືກສເນີໃຫ້ໄດ້ຮັບການປົກຄອງດູແລ້ຂາດຄວາມສາມາດໃນການດຳເນີນການທີ່ຈຳເປັນ

ບາງຢ່າງ, **ແຕ່ບໍ່ແມ່ນທັງໝົດ,** ເພື່ອເບິ່ງແຍງຄວາມຈຳເປັນສ່ວນຕົວດ້ານສຸຂະພາບຮ່າງກາຍ, ອາຫານການກິນ, ເຄື່ອງນຸ່ງຫົ່ມ, ທີ່ພັກອາສັຍ, ຫລື ການຄວບຄຸມຊັບສິນເງິນທອງ, ທາງສານບໍ່ມີສິດເລີຍທີ່ຈະແຕ່ງຕັ້ງຜູ້ປົກຄອງດູແລປະເພດທົ່ວໄປ – ຕ້ອງແຕ່ງຕັ້ງຜູ້ປົກຄອງດູແລປະເພດຈຳກັດ.

## ຫລັງຈາກວັນທີ 1 ມົກກະຣາ 1981 ການປົກຄອງດູແລທີ່ມີມາແຕ່ກ່ອນສຳລັບຄົນທີ່ມີອາການພິການດ້ານການເຕີບໂຕໄດ້ກາຍເປັນການປົກຄອງດູແລປະເພດຈຳກັດບໍ?

**ບໍ່.** ການປົກຄອງດູແລປະເພດທົ່ວໄປທີ່ກ່ຽວກັບຄົນທີ່ມີອາການພິການດ້ານການເຕີບໂຕບໍ່ໄດ້ກາຍເປັນການປົກຄອງດູແລປະເພດຈຳກັດຢ່າງອັດຕະໂນມັດຫລັງຈາກວັນທີ 1 ມົກກະຣາ 1981. ຜົນດີຫລາຍຢ່າງຂອງການປົກຄອງດູແລປະເພດຈຳກັດມີຢູ່ແລ້ວພາຍໃຕ້ກົດໝາຍຂອງການປົກຄອງດູແລປະເພດທົ່ວໄປ, ຮ່ວມທັງຄວາມສາມາດເລືອກວ່າຈະໃຫ້ສານສັ່ງກ່ຽວກັບສິດທິແລະໜ້າທີ່ຮັບຜິດຊອບໃດໆໄດ້.

# B. ການປົກຄອງດູແລປະເພດທົ່ວໄປ

## ກົດໝາຍໃໝ່ໄດ້ປ່ຽນສິດອຳນາດຂອງຜູ້ປົກຄອງດູແລທີ່ໄດ້ມີຢູ່ບໍ?

1. **ການຍິນຍອມຮັບການປິ່ນປົວ** – ເລີ້ມຕັ້ງແຕ່ວັນທີ 1 ມົກກະຣາ 1981, ຜູ້ປົກຄອງດູແລບໍ່ມີອຳນາດຍິນຍອມການປິ່ນປົວທາງພະຍາບານແທນຜູ້ຮັບການປົກຄອງດູແລວັ້ນໄວ້ແຕ່ໄດ້ຮັບຄຳສັ່ງຈາກສານທີ່ອະນຸມັດໃຫ້ຜູ້ປົກຄອງຍິນຍອມແທນ. ຂໍ້ຍົກວັ້ນຂໍ້ດຽວຂອງລະບຽບນີ້ແມ່ນຈະຍິນຍອມໃຫ້ປິ່ນປົວໄດ້ໂດຍບໍ່ມີຄຳສັ່ງຈາກສານຖ້າຜູ້ຮັບການປົກຄອງດູແລ**ບໍ່ໄດ້ຄັດຄ້ານ**ການປິ່ນປົວທີ່ສເນີ.



## ມີວິທີໃດທີ່ພໍ່ແມ່ຈະສາມາດມອບມໍລະດົກຫລາຍກວ່າ $2,000 ໃຫ້ແກ່ລູກໂດຍບໍ່ໃຫ້ລູກເສັຍສິດທີໄດ້ຮັບເງິນ SSI?

ມີ. ຕາມປື້ມຄູ່ມືລະບຽບການໂຄງການປະກັນສັງຄົມ, ເງິນກ້ອນໃດໆທີ່ຝາກໄວ້ໃຫ້ແກ່ຄົນໃນບັນຊີເງິນພິເສດ (ເພື່ອຄວາມຕ້ອງການພິເສດ) ຈະບໍ່ແມ່ນແຫລ່ງທີ່ຕ້ອງນັບຂອງຜູ້ຮັບຜົນປະໂຫຍດແລະ, ດັ່ງນັ້ນ, ບໍ່ໄດ້ຮ່ວມກັບຈຳນວນ $2,000 ທີ່ຈຳກັດ. ເພື່ອມີສິດໄດ້ຮັບ, ຜູ້ຮັບຜົນປະໂຫຍດຕ້ອງບໍ່ມີສິດຍົກເລີກບັນຊີດັ່ງກ່າວຫລືຄວບຄຸມຈຳນວນຫລືໄລຍະການເບີກເງິນຈາກບັນຊີດັ່ງກ່າວ. ມີການແນະນຳອີກວ່າຜູ້ດູແລບັນຊີເງິນພິເສດກ່ຽວກັບການເບີກຈ່າຍເງິນຄວນມີສິດໃຊ້ດຸນພິນິດເລື່ອງລາຍໄດ້ຂອງບັນຊີນັ້ນອີກດ້ວຍ. ຖ້າຕ້ອງເບີກຈ່າຍລາຍໄດ້ທັງໝົດເປັນໄລຍະໆ, ຜົນປະໂຫຍດ SSI ອາດຖືກຫລຸດລົງຫລືຕັດ.

## ເມື່ອຜູ້ຮັບຜົນປະໂຫຍດໄດ້ຮັບເງິນຈາກບັນຊີເງິນພິເສດ, ຈະມີຜົນແນວໃດກັບຜົນປະໂຫຍດ SSI?

ເງິນຈາກບັນຊີເງິນພິເສດທີ່ເບີກຈ່າຍໃຫ້ແກ່ຜູ້ຮັບຜົນປະໂຫຍດໂດຍກົງກໍນັບເປັນລາຍໄດ້ທີ່ບໍ່ໄດ້ຫາມາ. ຈຳນວນທັງໝົດທີ່ເບີກຈ່າຍແຕ່ລະເດືອນທີ່ເກີນກຳນົດລາຍໄດ້ທີ່ບໍ່ໄດ້ຫາມາທີ່ຍົກວັ້ນໄດ້ຄື $20, ຜົນປະໂຫຍດ SSI ປະຈຳເດືອນນັ້ນກໍຈະຫລຸດລົງເທົ່າຕົວ.

ການເບີກຈ່າຍເງິນຈາກບັນຊີເງິນພິເສດໃຫ້ແກ່ບຸກຄົນທີສາມ, ທີ່ບໍ່ແມ່ນຜູ້ຮັບຜົນປະໂຫຍດ, ບໍ່ໄດ້ຖືວ່າເປັນເງິນລາຍໄດ້ທີ່ບໍ່ໄດ້ຫາມາຂອງຜູ້ຮັບຜົນປະໂຫຍດຖ້າໄດ້ໃຊ້ເງິນນັ້ນເພື່ອຈຸດປະສົງຢ່າງອື່ນນອກການຊື້ອາຫານການກິນ, ເຄື່ອງນຸ່ງຫົ່ມແລະທີ່ພັກອາສັຍ. ຕົວຢ່າງ, ຜູ້ດູແລບັນຊີເງິນເພື່ອຄວາມຕ້ອງການພິເສດອາດຊື້ປີ້ຍົນສຳລັບຜູ້ຮັບຜົນປະໂຫຍດໄດ້ຈາກບໍຣິສັດສາຍການບິນຫລືຜູ້ຂາຍປີ້ການເດີນທາງໂດຍກົງໂດຍບໍ່ມີຜົນສະທ້ອນຕໍ່ເງິນ SSI ຂອງຜູ້ຮັບຜົນປະໂຫຍດ.

# ບົດທີ 2

## ພິໄນກຳແລະບັນຊີເງິນພິເສດ

### ພໍ່ແມ່ຄວນບໍ່ໃຫ້ລູກຊາຍຫລືລູກສາວຜູ້ທີ່ມີອາການພິການດ້ານການເຕີບໂຕມີສ່ວນແບ່ງໃນຊັບມໍຣະດົກບໍ?

ຈຸດປະສົງຫລັກຂໍ້ໜຶ່ງຂອງການວາງແຜນກອງຊັບສິນສຳລັບຄອບຄົວທີ່ມີລູກຫລືສະມາຊິກຄອບຄົວທີ່ມີປັນຍາອ່ອນຫລືມີອາການພິການດ້ານການເຕີບໂຕຄືໃຫ້ແນ່ໃຈວ່າ, ຫລັງຈາກພໍ່ແມ່ທັງສອງຄົນຕາຍແລ້ວ, ຜູ້ທີ່ພິການນັ້ນຍັງຈະໄດ້ຮັບການລ້ຽງດູຮັກສາຂັ້ນພື້ນຖານຈາກແຫລ່ງສາທາຣະນະ. ແນ່ນອນ, ເຫດຜົນທີ່ສົນໃຈການຮັບຜົນປະໂຫຍດສາທາຣະນະເພາະພໍ່ແມ່ສ່ວນຫລາຍບໍ່ສາມາດເສັຍຄ່າຮັກສາລ້ຽງດູທີ່ສູງທີ່ສຸດໃຫ້ແກ່ສະມາຊິກຄອບຄົວທີ່ພິການຕລອດຊີວິດ.

ແຫລ່ງການສນັບສນູນສາທາຣະນະຫລັກສຳລັບຄົນທີ່ບໍ່ສາມາດຫາລ້ຽງກຸ້ມໂຕເອງໂດຍການເຮັດວຽກແມ່ນໂຄງການເງິນຊ່ວຍປະກັນລາຍໄດ້ (SSI). ກົດລະບຽບທີ່ມີຢູ່ແລ້ວຫ້າມບໍ່ໃຫ້ຜູ້ຮັບເງິນ SSI ມີແຫລ່ງຊັບສິນປະເພດບໍ່ຍົກເວັ້ນເກີນກວ່າ $2,000.

ເພື່ອຊ່ວຍໃຫ້ລູກມີສິດໄດ້ຮັບ SSI, ພໍ່ແມ່ອາດຕັດລູກຫລືສະມາຊິກຄອບຄົວຜູ້ທີ່ມີອາການພິການດ້ານການເຕີບໂຕອອກຈາກພິໄນກຳເທົ່ານັ້ນ. ການເພິ່ງຜົນປະໂຫຍດສາທາຣະນະຢ່າງດຽວ, ໝາຍຄວາມວ່າຕ້ອງໝັ້ນໃຈວ່າກອງທຶນດັ່ງກ່າວຈະມີຕໍ່ໄປໃຫ້ຜູ້ທີ່ໄດ້ຮັບຈົນຕລອດຊີວິດແລະຈະພໍກັບຄ່າໃຊ້ຈ່າຍຂັ້ນພື້ນຖານທັງໝົດ.

ຍ້ອນການຊ່ວຍເຫລືອສາທາຣະນະມັກມີການສ່ຽງຕໍ່ການປ່ຽນແປງຕາມກະແສການເມືອງແລະອາດຈະບໍ່ຮັບເສັຍຄ່າສຳລັບຄວາມຈຳເປັນບາງຢ່າງ, ໂດຍທົ່ວໄປແລ້ວຈຶ່ງບໍ່ໄດ້ແນະນຳໃຫ້ຕັດລູກຜູ້ມີອາການພິການອອກຈາກພິໄນກຳຂອງພໍ່ແມ່ໂດຍກົງ.



ສານຈະອອກຄຳສັ່ງອະນຸມັດໃຫ້ຜູ້ປົກຄອງດູແລຍິນຍອມແທນຜູ້ຮັບການປົກຄອງດູແລເມື່ອເຫັນວ່າຜູ້ຮັບການປົກຄອງດູແລບໍ່ມີຄວາມສາມາດທີ່ຈະຍິນຍອມການປິ່ນປົວແບບໃດໆແລະສານຈຶ່ງໄດ້ໂອນອຳນາດການຍິນຍອມໃຫ້ແກ່ຜູ້ປົກຄອງດູແລຝ່າຍດຽວ. ການໄດ້ອອກຄຳສັ່ງດັ່ງກ່າວພຽງເທື່ອດຽວຈະພໍ, ເພາະວ່າຄຳສັ່ງນັ້ນຈະມີຜົນໃຊ້ໄດ້ຕໍ່ການປິ່ນປົວທຸກຊະນິດທີ່ອະນຸຍາດໄດ້. ຖ້າຜູ້ຮັບການປົກຄອງດູແລມີຄວາມສາມາດຍິນຍອມການປິ່ນປົວບາງຊະນິດໄດ້ແຕ່ບໍ່ແມ່ນທຸກຊະນິດ, ຜູ້ປົກຄອງດູແລຕ້ອງລໍຖ້າຈົນເຫັນວ່າຈຳເປັນຕ້ອງໄດ້ຮັບການປິ່ນປົວ, ແລ້ວຈຶ່ງຕ້ອງໄປເອົາຄຳສັ່ງຈາກສານເພື່ອການປິ່ນປົວສະເພາະທີ່ສເນີ.

ພາຍໃຕ້ກົດໝາຍວ່າດ້ວຍຂະບວນການອັນຊອບທຳຕາມກົດໝາຍເພື່ອຕັດສິນການຂາດສະມັດຕະພາບ, ທີ່ມີຜົນໃຊ້ການໃນປີ 1996, ບຸກຄົນໃດມີຄວາມສາມາດຍິນຍອມການປິ່ນປົວທາງພະຍາບານຖ້າບຸກຄົນນັ້ນສາມາດເຮັດສິ່ງຕໍ່ໄປນີ້ໄດ້ທຸກຢ່າງ:

(a) ຕອບຄຳຖາມກ່ຽວກັບການປິ່ນປົວທາງພະຍາບານໂດຍມີຄວາມຮູ້ແລະຄວາມເຂົ້າໃຈ.

(b) ເຂົ້າໃຈລັກສະນະແລະຄວາມຮ້າຍແຮງຂອງພະຍາດທີ່ເປັນມີ.

(c) ເຂົ້າໃຈລັກສະນະຂອງການປິ່ນປົວທາງພະຍາບານທີ່ຜູ້ໃຫ້ບໍຣິການກຳລັງແນະນຳໃຫ້.

(d) ເຂົ້າໃຈຜົນດີແລະການສ່ຽງທີ່ໜ້າຈະເປັນໄປໄດ້ຂອງການປິ່ນປົວທາງພະຍາບານທີ່ກຳລັງແນະນຳໃຫ້, ວ່າຮູ້ຜົນດີຜົນຮ້າຍໃນລະຍະເທົ່າໃດ, ແລະເຂົ້າໃຈຜົນທີ່ຈະເກີດຂຶ້ນໄດ້ຖ້າບໍ່ຮັບການປິ່ນປົວ.

(e) ເຂົ້າໃຈລັກສະນະ, ການສ່ຽງແລະຜົນປະໂຫຍດຂອງການປິ່ນປົວວິທີອື່ນທີ່ໜ້າໃຊ້ໄດ້.

ແນ່ນອນ, ບໍ່ມີຜູ້ປົກຄອງດູແລຄົນໃດສາມາດຍິນຍອມການປິ່ນປົວທີ່ຈະເປັນອັນຕະລາຍຕໍ່ຜູ້ຮັບການປົກຄອງດູແລ. ອີກຢ່າງໜຶ່ງ, ທາງກົດໝາຍ

**ຫ້າມບໍ່ໃຫ້**ຜູ້ປົກຄອງດູແລຫລືສານອະນຸຍາດການປິ່ນປົວອາການໂລກຈິດໂດຍການໃຊ້ກະແສໄຟຟ້າຈີ້, ການຜ່າຕັດສະໝອງ, ຫລືການໃຊ້ຢາບາງຢ່າງທີ່ກຳລັງວິໄຈທົດລອງ. ພາຍໃຕ້ການປົກຄອງດູແລປະເພດຈຳກັດຈະສາມາດເຮັດໝັນໄດ້ແຕ່ໃນກໍຣະນີຈຳກັດທີ່ສຸດເທົ່ານັ້ນ. ຈະເຮັດໝັນບໍ່ໄດ້ໃນກໍຣະນີໃດໆທີ່ເຫັນວ່າບຸກຄົນນັ້ນບໍ່ຍອມຮັບການເຮັດໝັນໂດຍມີຄວາມເຂົ້າໃຈ. ເຖິງແມ່ນວ່າບໍ່ມີການປະຕິເສດ້ນີ້ກໍຕາມ, ເພື່ອຈະເຮັດໝັນໄດ້, ຕ້ອງດຳເນີນການຕາມກະບວນການພິເສດທີ່ມີການປ້ອງກັນຫລາຍດ້ານສຳລັບຜູ້ຮັບການປົກຄອງດູແລປະເພດຈຳກັດ. ການປ້ອງກັນນີ້ລວມທັງ: ຈຳເປັນຕ້ອງມີການແຕ່ງຕັ້ງທະນາຍຄວາມສຳລັບຜູ້ຮັບການປົກຄອງດູແລປະເພດຈຳກັດ, ການແຕ່ງຕັ້ງ "ຜູ້ຊ່ວຍອຳນວຍຄວາມສະດວກ" ເພື່ອຊ່ວຍຜູ້ຮັບການປົກຄອງດູແລ, ການຕັ້ງຄນະຜູ້ຊ່ຽວຊານພິເສດເພື່ອສຳພາດຜູ້ຮັບການປົກຄອງດູແລແລ້ວສົ່ງຄຳສເນີຂຶ້ນໄປຍັງສານ, ແລະການສອບສວນໂດຍສູນກາງເຂດທີ່ກ່ຽວຂ້ອງ.

**2. ຄວາມສາມາດຕົກລົງຄຳສັນຍາ** – ເລີ້ມຕັ້ງແຕ່ວັນທີ 1 ມົກກະຣາ 1981, ຜູ້ຮັບການປົກຄອງດູແລບໍ່ສາມາດຕົກລົງຄຳສັນຍາຫລືຈັດການທາງການເງິນຢ່າງອື່ນທີ່ນອກເໜືອຄ່າອາຫານແລະເຄື່ອງນຸ່ງຫົ່ມທີ່ຈຳເປັນ. ເພື່ອເຂົ້າໃຈຄວາມສຳຄັນຂອງການປ່ຽນແປງນີ້ໄດ້, ຈຳເປັນຕ້ອງທົບທວນເບິ່ງລະບົບການປົກຄອງດູແລຊັບສິນກ່ອນວັນທີ 1 ມົກກະຣາ 1981.

ກ່ອນນັ້ນ, ໄດ້ມີການປົກຄອງດູແລຊັບສິນສອງປະເພດ: ປະເພດໜຶ່ງແມ່ນແບບທີ່ຜູ້ຮັບການປົກຄອງດູແລຊັບສິນຖືກຕັດສິນວ່າຂາດຄວາມສາມາດແລະອີກປະເພດໜຶ່ງທີ່ບໍ່ໄດ້ມີການຕັດສິນ. ຄຳສັນຍາຂອງຜູ້ຮັບການປົກຄອງດູແລຜູ້ທີ່ໄດ້ຖືກຕັດສິນວ່າຂາດຄວາມສາມາດກໍ**ເປັນໂມຄະ**ແລະບໍ່ສາມາດໃຊ້ບັງຄັບຕາມຄຳສັນຍາໄດ້, ບໍ່ວ່າສະຖານະການການຕົກລົງຄຳສັນຍານັ້ນຈະເປັນແນວໃດກໍຕາມ. ການຈັດການດ້ານການເງິນຂອງຜູ້ຮັບການປົກຄອງດູແລຊັບສິນທີ່ບໍ່ໄດ້ມີການຕັດສິນວ່າຂາດຄວາມສາມາດກໍສາມາດໃຊ້ບັງຄັບຕາມຄຳສັນຍາໄດ້, ຖ້າການຈັດການດ້ານການເງິນເຫລົ່ານີ້ເປັນຜົນປະໂຫຍດອັນດີທີ່ສຸດຂອງຜູ້ຮັບການປົກຄອງດູແລຊັບສິນດັ່ງກ່າວ.



ກ່ອນວັນທີ 1 ມົກກະຣາ 1981, ບໍ່ທັນໄດ້ມີການປົກຄອງດູແລຊັບສິນປະເພດຈຳກັດ. ອຳນາດຂອງຜູ້ຮັບການປົກຄອງດູແລຊັບສິນປະເພດຈຳກັດບໍ່ມີການຈຳກັດການຕົກລົງຄຳສັນຍາ, ເວັ້ນໄວ້ແຕ່ສານໄດ້ໂອນອຳນາດຕົກລົງຄຳສັນຍາໃຫ້ແກ່ຜູ້ປົກຄອງດູແລຊັບສິນປະເພດຈຳກັດໃນເມື່ອສານໄດ້ພິຈາຣະນາຄຳຮ້ອງຂໍ, ແລະອຳນາດໃດໆທີ່ທາງສານບໍ່ໄດ້ໂອນກໍຍັງເປັນຂອງຜູ້ຮັບການປົກຄອງດູແລຊັບສິນປະເພດຈຳກັດ.

ສຳລັບຜູ້ໃຫຍ່ທີ່ຢູ່ພາຍໃຕ້ການປົກຄອງ ("guardianship") ກ່ອນວັນທີ 1 ມົກກະຣາ 1981, ແລະສຳລັບຜູ້ຮັບການປົກຄອງດູແລຊັບສິນຜູ້ທີ່ຖືກຕັດສິນວ່າຂາດຄວາມສາມາດ, ກົດໝາຍໃໝ່ບໍ່ໄດ້ມີການປ່ຽນແປງສິດການຕົກລົງຄຳສັນຍາເພາະວ່າ, ພາຍໃຕ້ກົດໝາຍທັງກ່ອນແລະຫລັງປີ 1981, ການຈັດການດ້ານການເງິນຂອງຄົນດັ່ງກ່າວຈະໃຊ້ບັງຄັບບໍ່ໄດ້ເວັ້ນໄວ້ແຕ່ຄ່າສະບຽງອາຫານແລະເຄື່ອງນຸ່ງຫົ່ມ. ຜູ້ຮັບການປົກຄອງດູແລຊັບສິນຜູ້ທີ່ບໍ່ໄດ້ຖືກຕັດສິນວ່າຂາດຄວາມສາມາດກ່ອນວັນທີ 1 ມົກກະຣາ 1981, ຫລັງຈາກວັນທີນັ້ນກໍໄດ້ມີການຍົກເລີກສິດທີ**ໂດຍອັດຕະໂນມັດ**ທີ່ຈະເຮັດເປັນຂອງຂວັນຫລືຕົກລົງຄຳສັນຍາຜູກມັດໄດ້. ຜົນຂອງການປ່ຽນແປງນີ້ເປັນຜົນກະທົບຢ່າງຮ້າຍແຮງຕໍ່ຄົນສູງອາຍຸທີ່ມີຊັບສິນຫລາຍທີ່ມີຄວາມສາມາດແລະຄວາມປະສົງທີ່ຈະເຮັດເປັນຂອງຂວັນໃນເມື່ອຍັງມີຊີວິດຢູ່ແຕ່ໄດ້ຢູ່ພາຍໃຕ້ການປົກຄອງດູແລຊັບສິນ.

ທາງດຽວທີ່ຜູ້ຮັບການປົກຄອງດູແລຊັບສິນທີ່ມີຄວາມສາມາດເພື່ອຈະຮັກສາສິດທິຕົກລົງຄຳສັນຍາຄືໃຫ້ຮ້ອງຂໍຄຳສັ່ງຈາກສານສູງ. ວິທີດຳເນີນການເພື່ອຂໍຄຳສັ່ງດັ່ງກ່າວໄດ້ບົ່ງໄວ້ໃນກົດໝາຍປີ 1981.

ຖ້າທ່ານມີຄຳຖາມວ່າການປ່ຽນແປງກົດໝາຍການປົກຄອງດູແລຊັບສິນຈະມີຜົນກ່ຽວກັບເລື້ອງສ່ວນຕົວທ່ານແນວໃດ, ທ່ານຄວນປຶກສາທະນາຍຄວາມ.